ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ມັງກອນ 2026
ປີທີ 15
ສະບັບທີ 1051
ລາຍສັບປະດາ

## ບົດຄຳເຫັນທ່ານ ປອ. ໄຊສົມພອນ ພົມວິຫານ ຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V



ທ່ານ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການເລືອກຕັ້ງລະດັບຊາດ ໃຫ້ສຳພາດໃນວັນທີ 30 ມັງກອນ 2026 ກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ບັນດານັກຂ່າວ, ຜູ້ຕາງໜ້າສື່ມວນຊົນ ທີ່ຮັກແພງ.

ບັນດາພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າ ທີ່ຮັກແພງທັງຫຼາຍ.

ອ່ານຕໍ່ໜ້າ 7

## ຄະນະກຳມະການເລືອກຕັ້ງລະດັບຊາດ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ X



(ສພຊ) - ຕອນສວາຍວັນອາທິດທີ 25 ມັງກອນນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ກຳມະການ ຄະນະກຳມະການເລືອກຕັ້ງລະດັບຊາດ, ຮອງຫົວໜ້າອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X.

ອີງຕາມມາດຕາ11ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024 ແລະ ລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 338/ປປທ, ລົງວັນທີ 30 ທັນວາ 2025 ວ່າດ້ວຍການປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV; ໂດຍຜ່ານການຄົ້ນຄວ້າພິຈາລະນາຕົກລົງເຫັນດີຂອງກອງປະຊຸມຄະນະກຳມະການເລືອກຕັ້ງລະດັບຊາດ ຄັ້ງວັນທີ 23 ມັງກອນ 2026, ຄະນະກຳມະການເລືອກຕັ້ງລະດັບຊາດ ປະກາດແຈ້ງການກ່ຽວກັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ຢູ່ເຂດເລືອກຕັ້ງຕ່າງໆ ໃນຂອບເຂດທົ່ວປະເທດ (ລາຍລະອຽດ ຕາມປະກາດແຈ້ງການ ສະບັບເລກທີ87/ຄລຊ, ລົງວັນທີ 25 ມັງກອນ 2026 ຂອງຄະນະກຳມະການເລືອກຕັ້ງລະດັບຊາດ).

ການປ່ອນບັດເລືອກຕັ້ງແມ່ນຈະຈັດຂຶ້ນໃນວັນອາທິດທີ 22 ກຸມພາ 2026.

ອ່ານຕໍ່ໜ້າ 3



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນໄລຍະທີ່ຜ່ານມາ, ພວກເຮົາເຄີຍໄປຫາບ່ອນທີ່ເປັນແບບຢ່າງນຳໜ້າ, ອັນນັ້ນກໍບໍ່ຜິດດອກ, ແຕ່ມັນບໍ່ທັນຮອບດ້ານເທື່ອ, ພວກເຮົາຕ້ອງໄປຮອດກະທັ້ງບ່ອນທີ່ຂະບວນການຍັງອ່ອນແອ, ບ່ອນທີ່ມີຄວາມຫຍຸ້ງຍາກຫຼາຍ ເພື່ອຊ່ວຍພະນັກງານຮາກຖານ ໃນການແກ້ໄຂຄວາມຫຍຸ້ງຍາກຕ່າງໆ ແລ້ວພາຂະບວນກ້າວຂຶ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 190)

ແບບແຜນເຮັດວຽກແບບໃໝ່ ຍັງເລັ່ງທວງພວກເຮົາວ່າ ໃນການແກ້ໄຂວຽກງານໃດໆກໍຕາມ ຈະຕ້ອງມີຈຸດໜັກ, ຈຸດໃຈກາງ, ແກ້ໄຂວຽກໃດກໍຕ້ອງໃຫ້ສຳເລັດວຽກນັ້ນ, ຕ້ອງຮູ້ສົມທົບເຂົ້າໃສ່ຂອດທີ່ເປັນຂໍກະແຈ ເພື່ອສ້າງເປັນກຳລັງ ແລ້ວກະທົບຄືນໃສ່ຂອດອື່ນໆ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 192)

ອ່ານຕໍ່ສະບັບໜ້າ

## ຕິດຕາມ, ຊຸກຍູ້ ການກະກຽມເລືອກຕັ້ງຢູ່ຫົວພັນ



(ສພຊ) - ວັນພຸດທີ 28 ມັງກອນຜ່ານມາ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຮອງຫົວໜ້າອະນຸກຳມະການໂຄສະນາແລະປຸກລະດົມຂະບວນການ

ອ່ານຕໍ່ໜ້າ 12

## ຮອງປະທານສະພາແຫ່ງຊາດ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ



ອ່ານຕໍ່ໜ້າ 6

## ເຜີຍແຜ່ມະຕິການເຄື່ອນໄຫວວຽກງານສາຍດ່ວນ 156



(ສພຊ) - ກອງປະຊຸມເຜີຍແຜ່ມະຕິວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນ(156) ແລະ ແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານສາຍດ່ວນໃນໄລຍະຜ່ານມາເພື່ອປັບປຸງຮ່າງຄູ່ມືການເຄື່ອນໄຫວວຽກງານສາຍດ່ວນ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 23-25 ມັງກອນ 2026 ຢູ່ແຂວງຫຼວງພະບາງ

ອ່ານຕໍ່ໜ້າ 8

## ປະທານຄະນະ ສສຊ ເພດຍິງ ພົບປະສື່ມວນຊົນ



(ສພຊ) - ກອງປະຊຸມຮ່ວມລະຫວ່າງຄະນະສະມາຊິກສະພາແຫ່ງຊາດ(ສສຊ)ເພດຍິງກັບສື່ມວນຊົນຈັດຂຶ້ນໃນຕອນບ່າຍວັນທີ28 ມັງກອນຜ່ານມາທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ທຸມມາ ລີວົງພະຈັນ ກຳມະການສູນກາງພັກ, ປະທານກຳມາທິການຍຸຕິ

ອ່ານຕໍ່ໜ້າ 2



ໝາກກ້ວຍ... (ໜ້າ 9)




ການໂຄສະນາ... (ໜ້າ 11)

ເຂົ້າໃຈ້ ໄດ້ຂີດຮຽນ
ວິເສດ ສະແຫວງສຶກສາ

ຕັດໄມ້ທຳລາຍປ່າ... (ໜ້າ 12)

# ເຝິກທັກສະການລົງໂຄສະນາຫາສຽງໃຫ້ຜູ້ສະໝັກຮັບເລືອກຕັ້ງ ເປັນ ສສຊ ແລະ ສສຂ ເພດຍິງ




(ສພຊ) - ກອງປະຊຸມສຳມະນາເຝິກອົບຮົມໃຫ້ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ທີ່ເປັນເພດຍິງ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 30-31 ມັງກອນ 2026 ທີ່ເມືອງທ່າແຂກ ແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX, ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງລະດັບຊາດ, ມີບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ທີ່ເປັນເພດຍິງ ຈາກ 8 ແຂວງ ຄື: ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ລວມທັງໝົດ 180 ທ່ານ.

ທ່ານ ນາງ ທຸມມາລີ ວົງພະຈັນກ່າວວ່າ: ກອງປະຊຸມເຝິກອົບຮົມຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ໃນຊີວິດການເມືອງຂອງເພດຍິງ ທີ່ຈະລົງສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ທັງເປັນໂອກາດດີໃຫ້ຜູ້ແທນຈາກ 8 ແຂວງ ໄດ້ແລກປ່ຽນຄວາມຮູ້, ປະສົບການເຊິ່ງກັນແລະກັນ ແລະ ພ້ອມກັນເຊື່ອມຊຶມກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍຄືສິດ ແລະ ໜ້າທີ່ຂອງສະມາຊິກສະພາແຕ່ລະຂັ້ນ; ເນື້ອໃນສຳຄັນຂອງການເລືອກຕັ້ງ, ເອກະສານທີ່ພົວພັນກັບການເລືອກຕັ້ງ ລວມເຖິງການຍົກລະດັບຄວາມຮູ້ຄວາມເຂົ້າໃຈກ່ຽວກັບການໂຄສະນາ, ພົບປະປະຊາຊົນຜູ້ມີສິດເລືອກຕັ້ງ; ທັກສະການເວົ້າ, ພາສາກາຍ, ມາລະຍາດ, ການນຸ່ງຖື, ທັກສະການໃຫ້ສຳພາດຕໍ່ສື່ມວນຊົນ ແລະ ອື່ນໆ ທີ່ເປັນອົງຄວາມຮູ້ອັນພື້ນຖານຈຳເປັນທີ່ຜູ້ສະໝັກຮັບເລືອກຕັ້ງເພື່ອກະກຽມຄວາມພ້ອມລົງສູ່ສະໜາມເລືອກຕັ້ງ. ພ້ອມນີ້, ຜູ້ແທນກອງປະຊຸມຍັງຈະໄດ້ເຝິກປະຕິບັດຕົວຈິງເພື່ອສ້າງຄວາມໝັ້ນໃຈໃຫ້ຜູ້ເຂົ້າຮ່ວມໃນການໂຄສະນາຫາສຽງໃນການເລືອກຕັ້ງ, ແລກປ່ຽນບົດຮຽນ, ປະສົບການ.

ກອງປະຊຸມໄດ້ຮັບຟັງທິດຊີ້ນຳຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ກ່ຽວກັບວຽກງານເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໂດຍສະເພາະແມ່ນໄດ້ເຜີຍແຜ່ເນື້ອໃນມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ສະບັບເລກທີ 16/ຄລຊ, ລົງວັນທີ 12 ມັງກອນ 2026 ກ່ຽວກັບການໂຄສະນາ, ພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V. ພ້ອມນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ສະໝັກຮັບເລືອກຕັ້ງ ຈົ່ງສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ ແລະ ເຝິກປະຕິບັດຕົວຈິງໃຫ້ສາມາດນຳເອົາບົດຮຽນຈາກກອງປະຊຸມເຝິກອົບຮົມຄັ້ງນີ້ ໄປໝູນໃຊ້ເຂົ້າໃນການລົງສະໝັກຮັບເລືອກຕັ້ງຂອງແຕ່ລະທ່ານເກີດຜົນປະໂຫຍດສູງສຸດ ແນໃສ່ເຮັດໃຫ້ການເລືອກຕັ້ງຄັ້ງນີ້ສາມາດເລືອກໄດ້ ສສຊ ແລະ ສສຂ ເພດຍິງ ໃຫ້ໄດ້ 30% ຕາມລະດັບຄາດໝາຍທີ່ວາງໄວ້.

**(ກົງທະນູຄຳ ພິພັດເສລີ)**

# ຊຸກຍູ້ວຽກງານເລືອກຕັ້ງຢູ່ແຂວງໄຊຍະບູລີ




(ສພຊ) - ວັນທີ 22 ມັງກອນຜ່ານມາ ທີ່ສະໂມສອນແຂວງໄຊຍະລີ ໄດ້ມີກອງປະຊຸມຕິດຕາມ ແລະ ຊຸກຍູ້ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດປະຈຳເຂດເລອກຕັ້ງທີ 7 ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ໂດຍການເປັນປະທານຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຮອງຫົວໜ້າອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ເພັງມີລັນຄຳພັນເພັງກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ); ເຊິ່ງມີທ່ານ ດວງຕາ ໄຊວຸດ ປະທານຄະນະກຳມະການປົກຄອງແຂວງ ພ້ອມດ້ວຍບັນດາກຳມະການ, ຫົວໜ້າ-ຮອງຫົວໜ້າອະນຸກຳມະການເລືອກຕັ້ງແຂວງແລະກອງເລຂາຊ່ວຍວຽກຂອງ ຄລຂ ໄຊຍະບູລີ ເຂົ້າຮ່ວມຢ່າງພ້ອມພຽງ.

ທີ່ກອງປະຊຸມ, ທ່ານດຣ. ນາງ ໄກຍະສອນ ສີດາ ຄະນະປະຈຳພັກແຂວງ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງແຂວງ ໄດ້ລາຍງານການກະກຽມ ແລະ ດຳເນີນການເລືອກຕັ້ງຢູ່ແຂວງໄຊຍະລີ ວ່າ: ໄດ້ຜັນຂະຫຍາຍບັນດາມະຕິ, ຄຳແນະນຳຕ່າງໆຂອງຄະນະກຳມະການເລືອກຕັ້ງລະດັບຊາດ ມາເປັນມະຕິຂອງຄະນະບໍລິຫານງານພັກແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ 29 ສະບັບ ໃນນັ້ນ, ເພີ່ມ 1 ອະນຸກຳມະການຂອງ ຄລຂ ຄື: ອະນຸກຳມະການຮັກສາສຸຂະພາບ ລວມເປັນ 6 ອະນຸກຳມະການ; ສຳເລັດການເຝິກອົບຮົມພະນັກງານຫຼັກແຫຼ່ງອ້ອມຂ້າງແຂວງ, ກົມກອງແລະເມືອງທົ່ວແຂວງ; ປັດຈຸບັນ, ທົ່ວແຂວງມີ 500 ໜ່ວຍປ່ອນບັດເລືອກຕັ້ງ ໃນນີ້, ມີໜ່ວຍປ່ອນບັດເຄື່ອນທີ 3 ໜ່ວຍ, 482 ຫີບ ຕ້ອງການເພີ່ມ 518 ຫີບ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 303,426 ຄົນ ເປັນຍິງ 146,388 ຄົນ. ນອກນີ້, ຍັງໄດ້ຮັບຟັງການກະກຽມ ແລະ ດຳເນີນການເລືອກຕັ້ງຂອງເມືອງໄຊຍະບູລີ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນເສີມຂະຫຍາຍຄວາມຮັບຜິດຊອບສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນແລກປ່ຽນຕາມຫົວຂໍ້ຕ່າງໆ ໃຫ້ແທດເໝາະກັບຕົວຈິງ ແນໃສ່ສ້າງຄວາມເປັນເອກະພາບທາງດ້ານຫຼັກການ, ທັດສະນະ ແລະ ແນວຄິດ, ກຳຈັດຂໍ້ຂາດຕົກບົກຜ່ອງ ເພື່ອເຮັດໃຫ້ການເລືອກຕັ້ງຄັ້ງນີ້ ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການຫ້າງຫາກະກຽມໃຫ້ແກ່ການເລືອກຕັ້ງຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ-ເມືອງ ທັງເນັ້ນໜັກໃຫ້ເອົາໃຈໃສ່ເພີ່ມທະວີການໂຄສະນາ, ສ້າງຂະບວນການໃຫ້ຟົດຟື້ນເພື່ອໃຫ້ພົນລະເມືອງຜູ້ມີສິດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ເຖິງການນຳໃຊ້ສິດຂອງຕົນຢ່າງຄົບຖ້ວນຕາມທີ່ລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ທັງເອົາໃຈໃສ່ວຽກງານປ້ອງຄວາມສະຫງົບ ຮັບປະກັນໄດ້ຄວາມເປັນລະບຽບຮຽບຮ້ອຍຮອບດ້ານຕິດພັນກັບການຕິດຕາມສະພາບການຕົວຈິງໃນການເລືອກຕັ້ງ, ເອົາໃຈໃສ່ສ້າງແຜນ ແລະ ປະສານງານກັບບັນດາອະນຸກຳມະການລະດັບຊາດໃຫ້ລະອຽດຣັດກຸມ ຮັບປະກັນໄດ້ຕາມ 4 ຄາດໝາຍໃຫຍ່ຂອງ ຄລຊ.

ກ່ອນໜ້ານີ້ ຄືວັນທີ 19 ມັງກອນ, ທ່ານ ພົທ. ສຸວອນ ເລືອງບຸນມີຍັງໄດ້ຕິດຕາມແລະຊຸກຍູ້ວຽກງານເລືອກຕັ້ງຂອງຄະນະກຳມະການເລືອກຕັ້ງຂັ້ນເມືອງຢູ່ເມືອງຄອບ ເຊິ່ງທົ່ວເມືອງມີໜ່ວຍປ່ອນບັດ 32 ໜ່ວຍ, ມີພົນລະເມືອງ 22,038 ຄົນເປັນຍິງ 10,981 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງຕາມສຳມະໂນຄົວ 15,210 ຄົນ ເປັນຍິງ 7,607 ຄົນ. ໃນວັນທີ 29 ມັງກອນ, ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ຢູ່ເມືອງບໍ່ແຕນ ເຊິ່ງທົ່ວເມືອງມີ 30 ໜ່ວຍປ່ອນບັດ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 19,073 ຄົນ ເປັນຍິງ 9,825 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຕາມປຶ້ມສຳມະໂນຄົວ 14,793 ຄົນ ເປັນຍິງ 7,451 ຄົນ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະທານ...

(ຕໍ່ຈາກໜ້າ 1)

ທຳ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ມີບັນດາສື່ມວນຊົນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ; ທັງນີ້, ກໍເພື່ອປຶກສາຫາລືການຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໂດຍສະເພາະໂຄງປະກອບເພດ ເພື່ອຮັບປະກັນຜູ້ຮັບສະໝັກເລືອກຕັ້ງທີ່ເປັນເພດຍິງໄດ້ຮັບເລືອກເປັນ ສສຊ ແລະ ສະມາ ຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ສະເລ່ຍລວມບໍ່ໃຫ້ຫຼຸດ 30% ຂອງຈຳນວນ ສສຊ ແລະ ສສຂ ທັງໝົດທີ່ໄດ້ຮັບເລືອກຕັ້ງ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ມີຄຳເຫັນແລກປ່ຽນກ່ຽວກັບບົດບາດຂອງແມ່ຍິງໃນເວທີການເມືອງຢູ່ໃນໂລກ, ພາກພື້ນ ແລະ ສປປລາວ ໂດຍສະເພາະແມ່ນຜົນການວິເຄາະກ່ຽວກັບການເປັນຕົວແທນຂອງແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ໃນສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ). ນັບແຕ່ໃດໆມາ ພັກ, ລັດຖະບານ ກໍຄືສະພາແຫ່ງຊາດໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ການພັດທະນາ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍກໍຄືການມີສ່ວນຮ່ວມທາງດ້ານການເມືອງຂອງແມ່ຍິງ ເຊິ່ງສະແດງອອກຢູ່ໃນໂຄງການການເມືອງ 12 ຂໍ້ ຂອງພັກປະຊາຊົນປະຕິວັດລາວ ໃນຂໍ້ທີ 7 ໄດ້ກຳນົດແຕ່ຫົວທີກ່ຽວກັບການປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍ, ປະຕິບັດນະໂຍບາຍສະເໝີພາບ ແລະ ສາມັກຄີລະຫວ່າງເຜົ່າ, ລົບລ້າງຄວາມອາຄາດບາດໝາງ, ຄວາມແບ່ງແຍກລະຫວ່າງເຜົ່າຕ່າງໆ ຢູ່ພາຍໃນປະເທດ ທີ່ພວກລ່າເມືອງຂຶ້ນ ແລະ ສັກດີນາ ເປັນຜູ້ກໍ່ຂຶ້ນ; ຈາກນັ້ນ, ກໍໄດ້ຮັບການສືບຕໍ່ຜັນຂະຫຍາຍໃຫ້ເປັນແນວທາງ, ແຜນນະໂຍບາຍຂອງພັກ, ລັດທະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ລວມທັງການເຂົ້າເປັນພາຄີຂອງສົນທິສັນຍາສາກົນ.

ໃນໄລຍະຜ່ານມາ, ເພດຍິງທີ່ເປັນການນຳແຕ່ລະຂັ້ນໄດ້ເອົາໃຈໃສ່ ແລະ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການກຳນົດນະໂຍບາຍ, ການສ້າງ ແລະ ປັບປຸງກົດໝາຍ; ການພິຈາລະນາຕົກລົງບັນຫາສຳຄັນຂອງຊາດ, ທ້ອງຖິ່ນ; ການຕິດຕາມກວດກາການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເຮັດໃຫ້ບົດບາດຂອງເພດຍິງທີ່ເປັນການນຳໄດ້ຮັບການຍົກສູງຂຶ້ນ. ປັດຈຸບັນ, ອັດຕາສ່ວນຂອງເພດຍິງໃນເວທີການ ເມືອງມີຈຳນວນເພີ່ມຂຶ້ນ ເຊັ່ນ: ແມ່ຍິງທີ່ເປັນກຳມະການຄະນະບໍລິຫານງານສູນກາງພັກ ກວມເອົາ 16.9%, ສສຊ ກວມເອົາ 21.95%, ສສຂ ກວມເອົາ 30.48%, ລັດຖະມົນຕີ ແລະ ທຽບເທົ່າ ກວມເອົາ 27.27%, ຕຳແໜ່ງບໍລິຫານການປົກຄອງທ້ອງຖິ່ນ ກວມເອົາ 11.89% ເຊິ່ງຕົວເລກຄາດໝາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ກຳນົດໄວ້ແມ່ນ: ສສຊ ແລະ ສສຂ ເພດຍິງ ໃຫ້ກວມ 30% ຂຶ້ນໄປ; ການນຳທີ່ເປັນເພດຍິງຂັ້ນສູນກາງ ໃຫ້ກວມ 30% ຂຶ້ນໄປ, ຂັ້ນແຂວງ-ນະຄອນຫຼວງ ໃຫ້ກວມ 20% ຂຶ້ນໄປ, ຂັ້ນເມືອງ ໃຫ້ກວມ 20% ຂຶ້ນໄປ ແລະ ຂັ້ນບ້ານ ໃຫ້ກວມ 10% ຂຶ້ນໄປ; ເພດຍິງເປັນລັດຖະກອນ ໃຫ້ກວມ 50% ຂຶ້ນໄປເມື່ອທຽບໃສ່ຄາດໝາຍດັ່ງກ່າວ ແມ່ນບໍ່ສາມາດບັນລຸຕາມແຜນການທີ່ວາງໄວ້. ສະນັ້ນ, ເພື່ອກະກຽມໃຫ້ແກ່ການເລືອກຕັ້ງຄັ້ງນີ້ທີ່ຈະຈັດຂຶ້ນໃນວັນອາທິດທີ 22 ກຸມພາ 2026 ໃຫ້ມີຈຳນວນສະມາຊິກສະພາທີ່ເປັນເພດຍິງບັນລຸ 30% ຂຶ້ນໄປຕາມຄາດໝາຍທີ່ວາງໄວ້ນັ້ນ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໄດ້ດຳເນີນການຄົ້ນຄວ້າເພື່ອວິເຄາະກ່ຽວກັບການເປັນຕົວແທນຂອງເພດຍິງແລະຄວາມສະເໝີພາບຍິງ-ຊາຍ ໃນ ສພຊ ແລະ ສພຂ ຕາມການຕົກລົງເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ບວກກັບການສະໜັບສະໜູນດ້ານງົບປະມານ ແລະ ວິຊາການ ຈາກໂຄງການເສີມສ້າງຄວາມສາມາດ ແລະ ປະສິດທິພາບ ໃຫ້ແກ່ລະບົບສະພາປະຊາຊົນໃນ ສປປລາວ ຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ເຊິ່ງວິທີການຄົ້ນຄວ້າຂອງທີມງານ ແມ່ນໄດ້ດຳເນີນການທົບທວນຄືນບັນດາບົດຄົ້ນຄວ້າ ແລະ ຂໍ້ມູນທີ່ມີຢູ່ ເປັນຕົ້ນ: ນະໂຍບາຍ, ຍຸດທະສາດ, ກົດໝາຍ, ບົດຄົ້ນຄວ້າ, ບົດລາຍງານ ແລະ ອື່ນໆ ຈາກ 53 ແຫຼ່ງ; ໄດ້ດຳເນີນການສຳພາດແບບເຈາະເລິກກັບ ສສຊ 19 ທ່ານ ເປັນຍິງ 11 ທ່ານ ແລະດຳເນີນການສຳຫຼວດຕາມແບບສອບຖາມ ສສຊ, ສສຂ ແລະ ພະນັກງານທີ່ເຮັດວຽກຢູ່ ສພຊ ແລະ ສພຂ ທີ່ໄດ້ຕອບແບບສອບຖາມ 305 ທ່ານ.

| | |
|---|---|
| | (ສສຊ ຊຸດທີ IX); |
| 3. ທ່ານ ດາລີວັນ ພູສະຫວັນ | ກຳມະການປະຈຳພັກແຂວງ; |
| 4. ທ່ານ ພົຈວ ຄຳແຝງ ວັນທີໄຊ | ກຳມະການຄະນະພັກກະຊວງ, ຫົວໜ້າກົມຄົ້ນຄວ້າວິທະຍາສາດ ແລະ ປະຫວັດສາດ, ກະຊວງປ້ອງກັນຄວາມສະຫງົບ; |
| 5. ທ່ານ ນາງ ບົວຄົມ ຂານສຸວົງ | ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ-ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 6. ທ່ານ ນາງ ສີອຳໄພ ໂສລະຖີ | ກຳມະການພັກແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ; |
| 7. ທ່ານ ສຸລິເດດ ບັນນາກອນ | ກຳມະການພັກແຂວງ, ຫົວໜ້າພະແນກຍຸຕິທຳແຂວງ; |
| 8. ທ່ານ ແກ້ວລາ ນໍລະສິງ | ປະທານສະຫະພັນກຳມະບານແຂວງ; |
| 9. ທ່ານ ພັອ ຄຳແດງ ວັນນະສິດ | ຮອງຫົວໜ້າກອງບັນຊາການ ປກສ ແຂວງ; |
| 10. ທ່ານ ສົມສະຫວັນ ອິນດາວົງ | ຮອງຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ. |

**VI. ເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ: ມີຈຳນວນຜູ້ສະໝັກ 14 ທ່ານ, ເລືອກເອົາ 10 ທ່ານ.**

| | |
|---|---|
| 1) ທ່ານ ໄພວີ ສີບົວລີພາ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງ ຍຸຕິທຳ; |
| 2) ທ່ານ ບຸນເລື່ອມ ມະນີວົງ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງຫຼວງພະບາງ; |
| 3) ທ່ານ ສຳນານ ສິນທະນີ | ກຳມະການປະຈຳພັກແຂວງ; |
| 4) ທ່ານ ສົມພອນ ສີອຸດົມພັນ | ກຳມະການປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ (ສສຊ ຊຸດທີ IX); |
| 5) ທ່ານ ນາງ ພັນຈິນດາ ເລັ່ງສະຫວັດ | ຮອງປະທານສູນກາງສະຫະພັນແມ່ຍິງລາວ; |
| 6) ທ່ານ ຊົມຊື່ນ ໄຊເກີຢາຈົງຕົວ | ຮອງປະທານຄະນະກວດກາສູນກາງພັກ; |
| 7) ທ່ານ ສົມມາລີ ຄຳທັ່ງ | ກຳມະການພັກແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 8) ທ່ານ ນາງ ບົວສອນ ໄຊຍະໄຊ | ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ; |
| 9) ທ່ານ ນາງ ຈັນດີ ເຢັງວື | ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ; |
| 10) ທ່ານ ນາງ ກິ່ງນະຄອນ ຈັນທະກຸມມານ | ຫົວໜ້າກົມ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຮອງປະທານສະຫະພັນແມ່ຍິງ ສະພາແຫ່ງຊາດ; |
| 11) ທ່ານ ສຸລິໄຊ ທົງສາຄອນ | ເລຂາໜ່ວຍພັກ, ຮັກສາການຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ; |
| 12) ທ່ານ ແສງເພັດ ແກ້ວພົມມາ | ຫົວໜ້າພະແນກຍຸຕິທຳແຂວງຫຼວງພະບາງ; |



| | |
|---|---|
| 13) ທ່ານ ພັອ ວິໄລສິນ ມິດຕະພອນ | ຮອງຫົວໜ້າກອງບັນຊາການທະຫານແຂວງຫຼວງພະບາງ, ຫົວໜ້າຫ້ອງການເມືອງ; |
| 14) ທ່ານ ນາງ ວົງພະຈັນ ວົງປະດິດ | ເລຂາໜ່ວຍພັກ, ຫົວໜ້າສະຖາບັນເສດຖະກິດ-ການເງິນ ສາຂາພາກເໜືອ. |

**VII. ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ: ມີຈຳນວນຜູ້ສະໝັກ 13 ທ່ານ, ເລືອກເອົາ 09 ທ່ານ.**

| | |
|---|---|
| 1) ທ່ານ ເພັງນີລັນ ຄຳພັນເພັງ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງໄຊຍະບູລີ (ສສຊ ຊຸດທີ IX); |
| 2) ທ່ານ ມີໄຊ ພົມເຂ | ກຳມະການສຳຮອງສູນກາງພັກ, ຮອງຫົວໜ້າຫ້ອງວ່າການສູນກາງພັກ; |
| 3) ທ່ານ ພົຕ ໄພວັນ ຈັນທະພົມມາ | ກຳມະການປະຈຳພັກກະຊວງ, ຫົວໜ້າຫ້ອງວ່າການ ກະຊວງປ້ອງກັນປະເທດ; |
| 4) ທ່ານ ນາງ ໄກຍະສອນ ສີດາ | ກຳມະການປະຈຳພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ; |
| 5) ທ່ານ ກາວີ ເກດດົມລີ | ກຳມະການພັກແຂວງ; |
| 6) ທ່ານ ນາງ ວັນນາ ພົມວິສອນ | ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 7) ທ່ານ ປທ ນາງ ແສງມະນີ ຢາທໍ່ຕູ້ | ຮອງຫົວໜ້າກົມ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ; |
| 8) ທ່ານ ປອ ແວວເພັດ ສີບຸນມາ | ຮອງເລຂາຄະນະພັກຮາກຖານ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ; |
| 9) ທ່ານ ປອ ຄຳແສນ ສີສະວົງ | ປະທານສະມາຄົມການສຶກສາ ພາກເອກະຊົນ, ຮອງປະທານສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດລາວ (ສສຊ ຊຸດທີ IX); |
| 10) ທ່ານ ພັອ ບຸນທ່ຽງ ພັນດີ | ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ; |
| 11) ທ່ານ ນາງ ບົວຈັນ ຄຳຕາ | ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ; |
| 12) ທ່ານ ບຸນເສນ ລາວເບູຍຢາທໍ | ຮອງເລຂາໜ່ວຍພັກ, ຮອງຫົວໜ້າພະແນກຍຸຕິທຳແຂວງ; |
| 13) ທ່ານ ໄຊຖາວອນ ລັດຕະນະວົງ | ຄະນະໜ່ວຍພັກ, ຮອງປະທານສະຫະພັນກຳມະບານແຂວງ. |

**VIII. ເຂດເລືອກຕັ້ງທີ 8 ແຂວງຫົວພັນ: ມີຈຳນວນຜູ້ສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ.**

| | |
|---|---|
| 1) ທ່ານ ພຸດພັນ ແກ້ວວົງໄຊ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງຫົວພັນ; |
| 2) ທ່ານ ນາງ ສວຍເພັດ ທອງສົມບັດ | ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |



| | |
|---|---|
| 3) ທ່ານ ນາງ ຟອງທຳ ທຳມະທອງ | ກຳມະການພັກແຂວງ, ປະທານສະຫະພັນກຳມະບານແຂວງ; |
| 4) ທ່ານ ໄຈເພັດ ເຮືອງຖາວອນ | ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງແວດ ລ້ອມແຂວງ; |
| 5) ທ່ານ ໄຊຍະແສງ ຊົງຢົງຢາ | ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ; |
| 6) ທ່ານ ແສງສຸວັນ ວົງຄຳ | ກຳມະການພັກແຂວງ, ຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ; |
| 7) ທ່ານ ພັອ ນາງ ພວງທອງ ສຸຍະວົງ | ຮອງຜູ້ອຳນວຍການ ບໍລິສັດ ລັດວິສາຫະກິດການຄ້າ ຂາອອກ-ຂາເຂົ້າ ກອງທັບ; |
| 8) ທ່ານ ນາງ ສັນຄະນິງ ດາລາວົງ | ຮອງຫົວໜ້າກົມຈັດຕັ້ງ ກະຊວງອຸດສາຫະກຳ ແລະ ການຄ້າ; |
| 9) ທ່ານ ພັອ ອຳພອນ ພົມມະຈັນ | ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ; |
| 10) ທ່ານ ວິດາວົງ ເຮືອງມີສຸກ | ເລຂາໜ່ວຍພັກ, ຫົວໜ້າຄຸ້ມຄອງດ່ານສາກົນປາຮ່າງແຂວງ. |

**IX. ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ: ມີຈຳນວນຜູ້ສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ.**

| | |
|---|---|
| 1) ທ່ານ ສຈ ປອ ກິແກ້ວ ໄຂຄຳພິທູນ | ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ; |
| 2) ທ່ານ ຮສ ພູວົງ ອຸ່ນຄຳແສນ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງຊຽງຂວາງ; |
| 3) ທ່ານ ນາງ ສົມພອນ ໂສພິລາວັນ | ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ(ສສຂ ຊຸດທີ IV); |
| 4) ທ່ານ ນາງ ສາຍພູເງິນ ອຸດົມສຸກ | ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ, (ສສຂ ຊຸດທີ IV); |
| 5) ທ່ານ ຄຳແທ່ນ ວິລະກຸນ | ກຳມະການໜ່ວຍພັກຮາກຖານ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; |
| 6) ທ່ານ ເກົ້າມົວ ຊົ່ວໂກ້ | ປະທານຄະນະກຳມະການຍຸຕິທຳ, ປກຊ-ປກສ ສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 7) ທ່ານ ສອນເພັດ ລາພະທອງ | ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 8) ທ່ານ ນາງ ກິ່ງແກ້ວ ພົມມະຈັກ | ຮອງຫົວໜ້າພະແນກຍຸຕິທຳແຂວງ; |
| 9) ທ່ານ ວົງເພັດ ມັງທະພອນ | ຮອງປະທານກຳມະການເສດຖະກິດ, ແຜນການສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 10) ທ່ານ ພັອ ປິ່ນແກ້ວ ປະອິນພອນ | ຮອງຫົວໜ້າກອງບັນຊາການທະຫານແຂວງ. |

**X. ເຂດເລືອກຕັ້ງທີ 10 ແຂວງວຽງຈັນ: ມີຈຳນວນຜູ້ສະໝັກ 14 ທ່ານ, ເລືອກເອົາ 10 ທ່ານ.**

| | |
|---|---|
| 1) ທ່ານ ຮສ ປອ ທອງສະລິດ ມັງໜໍ່ເມກ | ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ; |



| | |
|---|---|
| 2) ທ່ານ ພູທະນູເພັດ ໄຊສົມບັດ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງວຽງຈັນ; |
| 3) ທ່ານ ອິນທະປັນຍາ ຊຽວວົງພະຈັນ | ຮອງເລຂາຄະນະພັກ, ຮອງຫົວໜ້າຫ້ອງວ່າການ ສຳນັກງານປະທານປະເທດ; |
| 4) ທ່ານ ສີທົນ ແສງພະຈັນ | ກຳມະການປະຈຳພັກ; |
| 5) ທ່ານ ນາງ ເພັດສະໝອນ ສອນ | ກຳມະການປະຈຳພັກ, ຫົວໜ້າສູນສະຖິຕິແຫ່ງຊາດ ກະຊວງການເງິນ; |
| 6) ທ່ານ ນາງ ຈັນທະຄອນ ສີອຳພອນ | ກຳມະການປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ; |
| 7) ທ່ານ ນາງ ວົງເດືອນ ວັດຕະໂສ | ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ; |
| 8) ທ່ານ ເຕັ່ງເມັ່ງ ຢ່າງລີໄຊ | ກຳມະການພັກແຂວງ, ຫົວໜ້າພະແນກການເງິນແຂວງ; |
| 9) ທ່ານ ດຣ ນາງ ວັນເພັງ ພັນທະນາໄລ | ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ; |
| 10) ທ່ານ ສີສະໄຫວ ແກ້ວດາລາວົນ | ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ; |
| 11) ທ່ານ ພັທ ບຸນນຳ ຈັນທອງສີ | ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 12) ທ່ານ ນາງ ສຸກສະຫວາດ ບັນທະແສງ | ຜູ້ພິພາກສາ ຊັ້ນສື່, ຮອງປະທານສານ ປະຈຳພາກກາງ; |
| 13) ທ່ານ ຕູ້ຊົງ ບົວສີຕົງຊື | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; |
| 14) ທ່ານ ຄຳຫຼ້າ ສີສຸວົງ | ຫົວໜ້າຫ້ອງວ່າການ ສະພາປະຊາຊົນແຂວງ (ສສຂ ຊຸດທີ IV). |

**XI. ເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ: ມີຈຳນວນຜູ້ສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ.**

| | |
|---|---|
| 1) ທ່ານ ປອ ກອງແກ້ວ ໄຊສີງຄາມ | ກຳມະການສູນກາງພັກ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ; |
| 2) ທ່ານ ປອ ສອນທະນູ ທຳມະວົງ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງບໍລິຄຳໄຊ; |
| 3) ທ່ານ ໄຊອຳພອນ ສິງຫາວົງ | ກຳມະການປະຈຳພັກແຂວງ; |
| 4) ທ່ານ ນາງ ຂັນທອງ ພັນທະຈັກ | ກຳມະການພັກແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ສສຊ ຊຸດທີ IX); |
| 5) ທ່ານ ປອ ສາຍທອງ ພົມມະວົງ | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ກຳມາທິການແຜນການ, ການເງິນ ແລະ ກວດສອບ ສະພາແຫ່ງຊາດ; |
| 6) ທ່ານ ໄຊຍະເພັດ ຈັນທະສອນ | ປະທານສະພາການຄ້າ-ອຸດສາຫະກຳແຂວງ, ຮອງປະທານແນວລາວສ້າງຊາດແຂວງ; |

| | |
|---|---|
| 7) ທ່ານ ພັທ ຈອນ ອຸລາຍັນ | ຄະນະພັກ, ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ; |
| 8) ທ່ານ ຈົ່ງຊົ່ງ ຈົ່ງເຕັ່ງ | ເລຂາໜ່ວຍພັກ, ຫົວໜ້າໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ; |
| 9) ທ່ານ ນາງ ຄຳໃບ ບໍລິວັນ | ຮອງເລຂາໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງແຂວງ; |
| 10) ທ່ານ ອຸທອນ ສິງຫາດວງປັນຍາ | ຮອງເລຂາຄະນະພັກ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ. |

**XII. ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ: ມີຈຳນວນຜູ້ສະໝັກ 14 ທ່ານ, ເລືອກເອົາ 10 ທ່ານ.**

| | |
|---|---|
| 1) ທ່ານ ປອ ໂພໄຊ ໄຊຍະສອນ | ກຳມະການສູນກາງພັກ, ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ; |
| 2) ທ່ານ ໄຊຊະນະ ໂຄດພູທອນ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງຄຳມ່ວນ; |
| 3) ທ່ານ ແກ້ວອຸດອນ ບຸດສິງຂອນ | ກຳມະການປະຈຳພັກແຂວງ; |
| 4) ທ່ານ ພູທອນ ວໍລະພັດ | ກຳມະການໜ່ວຍພັກຮາກຖານຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ (ສສຊ ຊຸດທີ IX); |
| 5) ທ່ານ ສາຍຄຳ ພະໄຊສິດທິເດດ | ກຳມະການປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ; |
| 6) ທ່ານ ນາງ ສຸກຂະເສີມ ສິດທິເດດ | ກຳມະການພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ; |
| 7) ທ່ານ ທອງເພັດ ຜຸຍຍະວົງ | ກຳມະການພັກແຂວງ, ປະທານສານປະຊາຊົນແຂວງ; |
| 8) ທ່ານ ໄພມະນີ ພິມມະສານ | ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ; |
| 9) ທ່ານ ສົມວິໄຊ ວົງທິລາດ | ກຳມະການພັກແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ; |
| 10) ທ່ານ ນາງ ກ້ອນແກ້ວ ຫຼວງໄຊມຸງຄຸນ | ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 11) ທ່ານ ບໍ ຫານປະເສີດ | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; |
| 12) ທ່ານ ທະນົງສິນ ກັນລະຍາ | ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, (ສສຊ ຊຸດທີ IX); |
| 13) ທ່ານ ນາງ ດາລາມິນ ສີສະຫວ່າງ | ຮອງເລຂາໜ່ວຍພັກຮາກຖານ, ຮອງປະທານສະຫະພັນແມ່ຍິງແຂວງ; |
| 14) ທ່ານ ພັອ ພັນມະຫາ ຈູມມະນີ | ຄະນະປະຈຳພັກ, ຮອງຫົວໜ້າການເມືອງ, ຫົວໜ້າຫ້ອງການເມືອງກອງບັນຊາການທະຫານແຂວງ. |



**XIII. ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ: ມີຈຳນວນຜູ້ສະໝັກ 28 ທ່ານ, ເລືອກເອົາ 21 ທ່ານ.**

| | |
|---|---|
| 1) ທ່ານ ປອ ນາງ ສູນທອນ ໄຊຍະຈັກ | ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສສຊ ຊຸດ ທີ IX); |
| 2) ທ່ານ ບຸນໂຈມ ອຸບົນປະເສີດ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງສະຫວັນນະເຂດ; |
| 3) ທ່ານ ໂພໄຊ ໄຂຄຳພິທູນ | ກຳມະການສູນກາງພັກ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ; |
| 4) ທ່ານ ໄຊລືຊາ ອິນສີຊຽງໃໝ່ | ກຳມະການປະຈຳພັກກະຊວງ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ; |
| 5) ທ່ານ ແສນສັກ ສຸລິສັກ | ກຳມະການປະຈຳພັກແຂວງ; |
| 6) ທ່ານ ພອນສານ ວິໄລເມັ້ງ | ກຳມະການຄະນະພັກ, ຮອງປະທານສູນກາງສະຫະພັນກຳມະບານລາວ (ສສຊ ຊຸດ ທີ IX); |
| 7) ທ່ານ ປອ ອາຄົມ ປຣະເສີດ | ຄະນະປະຈຳຄະນະພັກຮາກຖານ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ; |
| 8) ທ່ານ ແສນສັກ ພິມວົງສາ | ກຳມະການປະຈຳພັກແຂວງ, ປະທານຄະນະກວດກາພັກ-ລັດແຂວງ; |
| 9) ທ່ານ ສາລີ ວິນລາວັນ | ກຳມະການປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ; |
| 10) ທ່ານ ພູລຳພອນ ສີຫາວົງ | ກຳມະການປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ; |
| 11) ທ່ານ ສີສະຫວາດ ເພັງທະລັງສີ | ກຳມະການພັກແຂວງ; |
| 12) ທ່ານ ໄຊຍະເດດ ຜຸຍຍະວົງ | ກຳມະການພັກແຂວງ (ສສຊ ຊຸດ ທີ IX); |
| 13) ທ່ານ ດຣ ຈັນທະລາ ພາມີສິດ | ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ; |
| 14) ທ່ານ ຄຳພອງ ສົມວິຈິດ | ກຳມະການພັກແຂວງ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ; |
| 15) ທ່ານ ນາງ ມະໄລທອງ ທຳມະຕິກາ | ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ; |
| 16) ທ່ານ ສຸບັນທາ ຈູນລະມະນີ | ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງ ແວດລ້ອມແຂວງ; |
| 17) ທ່ານ ນາງ ບົວສະຫວັນ ລຸຍບົວທອງ | ກຳມະການພັກແຂວງ, ຫົວໜ້າພະແນກການເງິນແຂວງ; |
| 18) ທ່ານ ໄຊປັນຍາ ພິມວິຫານ | ຮອງເລຂາໜ່ວຍພັກ, ຮອງຫົວໜ້າກົມເລຂານຸການ, ສະພາແຫ່ງຊາດ; |



| | |
|---|---|
| 19) ທ່ານ ສົມບູນ ສີຫານາດ | ເລຂາໜ່ວຍພັກ, ຫົວໜ້າກົມເສດຖະກິດ ກະຊວງການຕ່າງປະເທດ; |
| 20) ທ່ານ ບຸນຍົງ ພົນເສນາ | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ກຳມາທິການກົດໝາຍ ສະພາແຫ່ງຊາດ; |
| 21) ທ່ານ ນາງ ທົງຄ□າ ໄຊຍະຄົມ | ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 22) ທ່ານ ທົງຄຳ ສຸວັນນະວົງ | ປະທານບໍລິສັດທີວີລາວ, ທີ່ປຶກສາ ສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ (ສສຊ ຊຸດທີ IX); |
| 23) ທ່ານ ນາງ ສຸກມາລາ ຈັນທະວົງ | ເລຂາໜ່ວຍພັກ, ຫົວໜ້າພະແນກຍຸຕິທຳແຂວງ; |
| 24) ທ່ານ ນາງ ບໍ່ແກ້ວ ແກ້ວພາວັນ | ຄະນະພັກຮາກຖານ, ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ; |
| 25) ທ່ານ ພັທ ພູມີດາວວອນ ອາດສະຜັນທອງ | ຮອງເລຂາໜ່ວຍພັກ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ (ສສຂ ຊຸດທີ IV); |
| 26) ທ່ານ ນາງ ບົງອອນ ພິມມະສານ | ເລຂາໜ່ວຍພັກຮາກຖານ, ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຂວງ; |
| 27) ທ່ານ ສິດທິໄຊ ໄຊຍະວົງ | ເລຂາຄະນະພັກຮາກຖານ, ອຳນວຍການມະຫາວິທະຍາໄລແຂວງ; |
| 28) ທ່ານ ທະນົງຊາຍ ສຸກຄຳຫັດ | ເລຂາໜ່ວຍພັກຮາກຖານ, ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ. |

**XIV. ເຂດເລືອກຕັ້ງທີ 14 ແຂວງສາລະວັນ: ມີຈຳນວນຜູ້ສະໝັກ 14 ທ່ານ, ເລືອກເອົາ 10 ທ່ານ.**

| | |
|---|---|
| 1) ທ່ານ ປອ ວິໄລວົງ ບຸດດາຄຳ | ກຳມະການສູນກາງພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ; |
| 2) ທ່ານ ປອ ດາວວົງ ພອນແກ້ວ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງສາລະວັນ; |
| 3) ທ່ານ ປອ ບຸນທັນ ບຸນວິໄລ | ຄະນະປະຈຳຄະນະພັກຮາກຖານ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ; |
| 4) ທ່ານ ຈັນສະໝອນ ພິມມະແສງ | ກຳມະການປະຈຳພັກແຂວງ; |
| 5) ທ່ານ ຈັນສີລອນ ສີສົມບູນ | ກຳມະການປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ; |
| 6) ທ່ານ ນາງ ວາດສະໜາ ໂພໄຊຍະວົງ | ກຳມະການພັກແຂວງ, ປະທານສະຫະພັນແມ່ຍິງແຂວງ; |
| 7) ທ່ານ ບຸນເຕັ່ຍ ດວງສຸລິຍະວົງສາ | ກຳມະການພັກແຂວງ; |
| 8) ທ່ານ ເພັດລາ ທຳມະວົງສາ | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມພົວພັນສອງຝ່າຍ, ກຳມາທິການຕ່າງປະເທດ ສະພາແຫ່ງຊາດ; |
| 9) ທ່ານ ນາງ ຄຳພໍ ສີລິພະຈັນ | ຮອງຫົວໜ້າໂຮງຮຽນການເມືອງ ແລະ ການປົກຄອງແຂວງສາລະວັນ; |



| | |
|---|---|
| 10) ທ່ານ ສົມພອນ ແສງສຸລິຈັນ | ຮອງເລຂາຄະນະພັກຮາກຖານ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 11) ທ່ານ ນາງ ເທວາ ສີລາດວງໃຈ | ຮອງເລຂາໜ່ວຍພັກ (ສສຂ ຊຸດທີ IV); |
| 12) ທ່ານ ພັອ ວິໄລ ພົມມະວົງ | ຄະນະພັກກອງບັນຊາການ, ຮອງຫົວໜ້າກອງບັນຊາການທະຫານແຂວງ; |
| 13) ທ່ານ ພູມີ ຈັນທະລັງສີ | ຄະນະພັກຮາກຖານ, ຮອງຜູ້ອຳນວຍການວິທະຍາໄລຄູ; |
| 14) ທ່ານ ບົວພັນ ຟອງພົນເສນາ | ຄະນະພັກຮາກຖານ, ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ. |

**XV. ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ: ມີຈຳນວນຜູ້ສະໝັກ 20 ທ່ານ, ເລືອກເອົາ 15 ທ່ານ.**

| | |
|---|---|
| 1) ທ່ານ ສອນໄຊ ສີພັນດອນ | ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ; |
| 2) ທ່ານ ອາລຸນໄຊ ສູນນະລາດ | ກຳມະການສູນກາງພັກ, ເລຂາຄະນະພັກແຂວງຈຳປາສັກ; |
| 3) ທ່ານ ນາງ ມິນາ ສີວິໄລ | ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ປປ ລາວ; |
| 4) ທ່ານ ແກ້ວລັດຕະນະ ສີຫາວົງ | ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສສຊ ຊຸດທີ IX); |
| 5) ທ່ານ ດຣ ໄພວັນ ແກ້ວປະເສີດ | ຮອງເລຂາຄະນະບໍລິຫານງານພັກກະຊວງ, ຮອງລັດຖະມົນຕີກະຊວງສາທາລະນະສຸກ; |
| 6) ທ່ານ ນາງ ພອນເພັດ ອຸ່ນແກ້ວ | ກຳມະການຄະນະພັກ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ສສຊ ຊຸດທີ IX); |
| 7) ທ່ານ ສິງຄຳ ວົງພະຈັນ | ກຳມະການຄະນະພັກສະພາແຫ່ງຊາດ, ຮອງເລຂາຄະນະພັກຮາກຖານ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ; |
| 8) ທ່ານ ວັນນະສັກ ຊາດຕະກຸນ | ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 9) ທ່ານ ປອ ບຸນຍະເດດ ທອງສະຫວັນ | ກຳມະການພັກແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ; |
| 10) ທ່ານ ອະນຸສັກ ຈັນທະປະເສີດ | ກຳມະການພັກແຂວງ, ກຳມະການປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ (ສສຂ ຊຸດທີ IV); |
| 11) ທ່ານ ພູວົງ ອະໄພ | ກຳມະການພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ; |
| 12) ທ່ານ ພິຈອ ແສງທອງ ທຳມະເທວາ | ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ກຳມາທິການ ປກຊ-ປກສ ສະພາແຫ່ງຊາດ; |

13) ທ່ານ ນາງ ປານຄຳ ຂະໜາບອຸໂອກ — ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ສະຖາບັນຄົ້ນຄວ້ານິຕິກຳ ສະພາແຫ່ງຊາດ;
14) ທ່ານ ນາງ ບຸນຊວັນ ໄພໄຊຊະນະສັກ — ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ (ສສຊ ຊຸດທີ IX);
15) ທ່ານ ທິບພະສອນ ສະມາເລີກ — ປະທານກວດກາໜ່ວຍພັກ, ກຳມະການປະຈຳສະພາປະຊາ ຊົນແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຂ ຊຸດທີ IV);
16) ທ່ານ ພອນສະຫວັນ ໄພສາລີ — ຮອງປະທານສານປະຊາຊົນແຂວງ;
17) ທ່ານ ດຣ ຈິນດາ ວົງສີລີ — ຜູ້ອຳນວຍການໂຮງງານຜະລິດຢາ CBF;
18) ທ່ານ ໄຊລີຊາ ຜຸຍຍະວົງ — ເລຂາຄະນະພັກຮາກຖານ, ຫົວໜ້າທະນາຄານແຫ່ງ ສປປ ລາວ ປະຈຳພາກໃຕ້;
19) ທ່ານ ນາງ ວັນຄຳ ແສງສະຫວ່າງ — ປະທານກວດກາໜ່ວຍພັກ, ຮອງປະທານສະຫະພັນແມ່ຍິງແຂວງ;
20) ທ່ານ ພັທ ກອງແກ້ວ ວຽງໄຊຍະສອນ — ຄະນະພັກ, ຮອງຫ້ອງການເມືອງ ກອງບັນຊາການທະຫານແຂວງ.

**XVI. ເຂດເລືອກຕັ້ງທີ 16 ແຂວງເຊກອງ: ມີຈຳນວນຜູ້ສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ.**

1) ທ່ານ ບຸນຈັນ ສີວົງພັນ — ກຳມະການສູນກາງພັກ, ຮອງຫົວໜ້າຫ້ອງວ່າການສູນກາງພັກ;
2) ທ່ານ ບຸນຫຼາຍ ບຸດທິ — ກຳມະການສູນກາງພັກ, ເລຂາຄະນະພັກແຂວງເຊກອງ;
3) ທ່ານ ຈັນທະບູນ ສຸກອາລຸນ — ຄະນະປະຈຳພັກກະຊວງ, ຮອງລັດຖະມົນຕີກະຊວງອຸດສາຫະກຳແລະ ການຄ້າ (ສສຊ ຊຸດ ທີ IX);
4) ທ່ານ ຕຸລາວັນ ວົງໄຊ — ກຳມະການປະຈຳພັກແຂວງ;
5) ທ່ານ ໃຈເພັດ ພັນທະວົງ — ກຳມະການພັກແຂວງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ແລະ (ສສຂ ຊຸດທີ IV);
6) ທ່ານ ນາງ ຄຳໄພ ວິລະສານ — ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຂ ຊຸດທີ IV);
7) ທ່ານ ນາງ ໄຣມະນີ ວົງໜໍ່ແກ້ວ — ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ (ສສຊ ຊຸດທີ IX);
8) ທ່ານ ພັອ ຮຽມ ໄຊຍະລາດ — ຮອງຫົວໜ້າກອງບັນຊາການ ປກສ ແຂວງ;
9) ທ່ານ ສຸກດາວັນ ເລຫວງດມ່ວງ — ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ;
10) ທ່ານ ສໍລະເສີນສັກ ຟອງສານຸວົງ — ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ.

**XVII. ເຂດເລືອກຕັ້ງທີ 17 ແຂວງອັດຕະປື: ມີຈຳນວນຜູ້ສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ.**

1) ທ່ານ ບຸນເຖິງ ດວງສະຫວັນ — ກຳມະການສູນກາງພັກ, ເລຂາຄະນະພັກແຂວງອັດຕະປື;

13

2) ທ່ານ ພິຈວ ສຸລີໄຊ ພິຈິດ — ກຳມະການສຳຮອງສູນກາງພັກ, ຮອງຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ;
3) ທ່ານ ລິດຕາ ຂັດທິຍະ — ກຳມະການປະຈຳພັກກະຊວງ, ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ;
4) ທ່ານ ພູວັນ ພົມມະຈັນ — ກຳມະການປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ (ສສຂ ຊຸດທີ IV);
5) ທ່ານ ກົງໃຈ ສີດາວົງ — ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;
6) ທ່ານ ນາງ ແສງອາລຸນ ວົງສາທິການ — ຄະນະພັກຮາກຖານ, ກຳມະການປະຈຳສະພາປະຊາຊົນແຂວງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ສສຂ ຊຸດທີ IV);
7) ທ່ານ ນາງ ອ່ອນໄສ ມຽງລາວັນ — ກຳມະການພັກແຂວງ, ຫົວໜ້າອຳນວຍການໂຮງຮຽນການເມືອງ-ການປົກຄອງແຂວງ;
8) ທ່ານ ຄຳໝັ້ນ ສີສະໝຸດ — ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ;
9) ທ່ານ ພັອ ບຸນເລີດ ແກ້ວພຸດທະວົງ — ຮອງເລຂາຄະນະພັກ, ຮອງກອງບັນຊາການ ປກສ ແຂວງ;
10) ທ່ານ ໄຊພອນ ໄຊສະຫວ່າງ — ຮອງຫົວໜ້າຫ້ອງວ່າການແຂວງ.

**XVIII. ເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ: ລົງສະໝັກ 10 ທ່ານ, ເລືອກເອົາ 07 ທ່ານ**

1) ທ່ານ ມອນໄຊ ລາວມົວຊົ່ງ — ກຳມະການສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ;
2) ທ່ານ ພອຍຄຳ ຮຸ່ງບຸນຍວງ — ກຳມະການສູນກາງພັກ, ເລຂາຄະນະພັກແຂວງໄຊສົມບູນ;
3) ທ່ານ ນາງ ຄຳສີ ສິດທິວໍລະດາ — ກຳມະການປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ;
4) ທ່ານ ຄົວຈົ້ງ ດຣາເຊັ້ງ — ກຳມະການພັກແຂວງ, ປະທານສະຫະພັນກຳມະບານແຂວງ;
5) ທ່ານ ນາງ ບຸນທະວີ ສີງວີໄລ — ກຳມະການພັກແຂວງ, ປະທານສະພັນແມ່ຍິງແຂວງ;
6) ທ່ານ ໂພສີ ເຕັມເພລາດ — ກຳມະການໜ່ວຍພັກຮາກຖານ, ຫົວໜ້າກົມ, ກຳມາທິການແຜນການ, ງົບປະມານ ແລະ ກວດສອບ ສະພາແຫ່ງຊາດ;
7) ທ່ານ ຄຳເພັດ ດວງມາລາ — ກຳມະການພັກແຂວງ, ຮອງປະທານຄະນະກວດກາພັກ-ລັດແຂວງ;
8) ທ່ານ ນິກອນ ນາມມະໄຊ — ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ;
9) ທ່ານ ຄົວຊົ່ງ ເລຍໂກ້ — ຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ;
10) ທ່ານ ປອ ສົມສັກ ບຸນມາຕາ — ຫົວໜ້າລັດວິສາຫະກິດໄຟຟ້າລາວ ສາຂາແຂວງໄຊສົມບູນ.

14

❖ ກ່ຽວກັບຄຸນລັກສະນະຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດຊຸດທີ X ມີ ດັ່ງນີ້:

- **ຜູ້ສະໝັກທັງໝົດຈຳນວນ 243 ທ່ານ, ຍິງ 66 ທ່ານ ເລືອກເອົາ 175 ທ່ານ.**
- ຜູ້ສະໝັກຈາກສູນກາງຈຳນວນ 67 ທ່ານ, ຍິງ 18 ທ່ານ;
- ຜູ້ສະໝັກຈາກທ້ອງຖິ່ນຈຳນວນ 176 ທ່ານ, ຍິງ 48 ທ່ານ.
    - ສສຊ ຊຸດທີ IX ສືບຕໍ່ສະໝັກ ຈຳນວນ 37 ທ່ານ, ຍິງ 15 ທ່ານ;
    - ຜູ້ສະໝັກຈາກລັດວິສາຫະກິດ ຈຳນວນ 01 ທ່ານ, ຍິງ 0 ທ່ານ;
    - ຜູ້ສະໝັກຈາກທຸລະກິດພາກເອກະຊົນ ຈຳນວນ 09 ທ່ານ, ຍິງ 02 ທ່ານ.

ຄະນະກຳມະການເລືອກຕັ້ງລະດັບຊາດ
ປະທານ

ປອ ໄຊສົມພອນ ພົມວິຫານ




## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ)-ວັນທີ 19-29 ມັງກອນຜ່ານມາ, ທ່ານ ພົທ. ສຸວອນເລືອງບຸນມີຮອງປະທານສະພາແຫ່ງຊາດ (ສພຊ), ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ7ພ້ອມດ້ວຍທ່ານ ເພັງນິລັນ ຄຳພັນເພັງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 7 ສົມທົບກັບສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ແລະ ສພຂ ໄຊຍະບູລີ ຊຸດທີ IV ຢູ່ 11 ເມືອງ ແລະ ພະແນກການຂອງແຂວງໄຊຍະບູລີ ໂດຍການຕ້ອນຮັບຂອງທ່ານປະທານຄະນະກຳມະການປົກຄອງແຂວງ, ບັນດາເລຂາຄະນະບໍລິຫານງານພັກເມືອງ, ຄະນະປະຈຳພັກເມືອງເຊິ່ງມີພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ-ຕຳຫຼວດ, ເລຂາພັກບ້ານເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາແລະບາງທິດທາງແຜນການໃນຕໍ່ໜ້າຂອງແຕ່ລະເມືອງ; ຈາກນັ້ນ, ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ເຊິ່ງໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ 14 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 8 ສະບັບ ແລະ ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ໄຊຍະບູລີ ຊຸດທີ IV ເຊິ່ງໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ 7 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 6 ສະບັບ. ພ້ອມນັ້ນ, ບັນດາທ່ານສສຊຍັງໄດ້ສະແດງຄວາມຂອບໃຈຕໍ່ປະຊາຊົນຜູ້ມີສິດເລືອກຕັ້ງໃນເຂດເລືອກຕັ້ງທີ 7 ທີ່ໄດ້ໃຫ້ການສະໜັບສະໜູນໃນການເຄື່ອນໄຫວເປັນຕົວແທນແຫ່ງສິດ, ຜົນປະໂຫຍດຂອງປະຊາຊົນ ໃນຕະຫຼອດໄລຍະ 5 ປີທີ່ຜ່ານມາ, ສະແດງຄວາມຂອບໃຈພໍ່ແມ່ປະຊາຊົນຊາວແຂວງໄຊຍະບູລີ ທີ່ໄດ້ໃຫ້ຄວາມໄວ້ວາງໃຈ ເລືອກຕັ້ງເອົາມາເປັນຕົວແທນແຫ່ງສິດ ແລະຜົນປະໂຫຍດຂອງຕົນ, ແລະ ສະແດງຄວາມຫວັງວ່າ ບັນດາທ່ານຜູ້ມີສິດເລືອກຕັ້ງ ຈະເຂົ້າຮ່ວມໃນບັ້ນເລືອກຕັ້ງສສຊຊຸດທີ X ແລະ ສສຂ ຊຸດທີ V ໃຫ້ໄດ້ຕາມຄາດໝາຍ.

**(ນາງ ອາລິນ ສຸພົມມະປະດິດ)**

## ບົດຄຳເຫັນ...

(ຕໍ່ຈາກໜ້າ 1)

ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ IV ມາຮອດປັດຈຸບັນ ຈະຄົບອາຍຸການ 5 ປີ ຕາມລັດຖະທຳມະນູນແລະກົດໝາຍກຳນົດ ໃນເດືອນກຸມພາ 2026 ນີ້. ສະນັ້ນ, ສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ພວມສຸມໃສ່ກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢ່າງເປັນຂະບວນຟົດຟື້ນ.

ຂ້າພະເຈົ້າ ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ຂໍສະແດງຄວາມຂອບໃຈຕໍ່ບັນດາສື່ມວນຊົນຈາກສຳນັກຂ່າວຕ່າງໆ ທີ່ໄດ້ຈັດຕັ້ງການສຳພາດຂ້າພະເຈົ້າ ໃນໂອກາດການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈະມາເຖິງນີ້, ຂ້າພະເຈົ້າ ມີຄຳເຫັນດັ່ງນີ້:

1. ຄວາມໝາຍ, ຄວາມສຳຄັນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ເນື້ອແທ້ແມ່ນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໂດຍສະເພາະການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃນການບູລະນະລັດປະຊາທິປະໄຕປະຊາຊົນ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ, ກາຍເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ; ເປັນການສ້າງເງື່ອນໄຂໃຫ້ພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນລາວບັນດາເຜົ່າ ໄດ້ນຳໃຊ້ສິດປະຊາທິປະໄຕຂອງຕົນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ36ຂອງລັດຖະທຳມະນູນ ກ່ຽວກັບສິດຂອງພົນລະເມືອງລາວ ໃນການເລືອກຕັ້ງແລະສະໝັກຮັບເລືອກຕັ້ງ; ເປັນການເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເຂົ້າໃນການເລືອກຕັ້ງເອົາຕົວແທນຂອງຕົນ ເພື່ອປະຕິບັດໜ້າທີ່ພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມສະພາແຫ່ງຊາດ ແລະ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ການເລືອກຕັ້ງຄັ້ງນີ້ ຍັງເປັນເຫດການທາງການເມືອງຂອງຊາດ, ມີຄວາມໝາຍສຳຄັນ ແລະ ຈຳເປັນໃນການປັບປຸງລະບົບອຳນາດແຫ່ງລັດ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ເພື່ອຕອບສະໜອງໜ້າທີ່ການເມືອງໃນໄລຍະໃໝ່ຂອງພວກເຮົາ. ການເລືອກຕັ້ງຄັ້ງນີ້ ດຳເນີນໄປໃນບັນຍາກາດທີ່ທົ່ວພັກ, ທົ່ວລັດ, ກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ຫາກໍສຳເລັດການສະເຫຼີມສະຫຼອງ3ວັນປະຫວັດສາດ (ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 70 ປີ, ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ, ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ) ແລະ ໃນບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ກໍຄືທົ່ວປວງຊົນລາວທັງຊາດມີຄວາມເອກອ້າງທະນົງໃຈຕໍ່ຜົນສຳເລັດຂອງການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີXIIຂອງພັກ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ວາງເປົ້າໝາຍ, ທິດທາງໜ້າທີ່ໃນ 5 ປີຕໍ່ໜ້າ; ອັນພິເສດ, ໄດ້ຮັບຮອງເອົາໂຄງການການເມືອງຂອງພັກ ສະບັບທີ 3 ເຊິ່ງໄດ້ຕີລາຄາການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ການປະຕິບັດວາງແນວທາງນະໂຍບາຍທີ່ສຳຄັນຫຼາຍດ້ານໃນການນຳພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄັ້ງນີ້ ເປັນການເພີ່ມທະວີການນຳພາຂອງພັກຕໍ່ການເຄື່ອນໄຫວວຽກງານຂອງອົງການຕົວແທນແຫ່ງສິດ, ອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ດ້ວຍການເພີ່ມພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງພັກ ແລະ ລັດ ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ມີຈຳນວນເພີ່ມຂຶ້ນ ເຊິ່ງມີຈຳນວນເຖິງ 30 ກວ່າສະຫາຍ ໃນຈຳນວນຜູ້ສະໝັກຮັບເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ຈຳນວນ 243 ທ່ານ ເພື່ອເລືອກເອົາ 175 ທ່ານ ແລະ ມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈຳນວນ 1,041 ທ່ານ, ເລືອກເອົາ 745 ທ່ານ; ໃນນັ້ນ, ອາຍຸກະສຽນຜູ້ສະໝັກຮັບເລືອກຕັ້ງ ອາຍຸ 45 ປີລົງມາ ກວມອັດຕາສ່ວນ 15-20%, ອາຍຸ 46-55 ປີກວມອັດຕາສ່ວນ35-45%, ອາຍຸ 56-60 ປີ ກວມເອົາ 25-30%, ອາຍຸ 60 ປີຂຶ້ນໄປ ກວມອັດຕາສ່ວນ 10-15%, ອາຍຸສູງສຸດ ແມ່ນ 69 ປີ, ອາຍຸນ້ອຍສຸດ ແມ່ນ 36 ປີ, ອັດຕາສ່ວນເພດຍິງ 35% ເຊິ່ງມີຕົວຈາກອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການ ຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖາບັນການສຶກສາພາກລັດ-ເອກະຊົນ, ວິສາຫະກິດລັດ, ສະຫະກອນ, ວິສາຫະກິດເອກະຊົນ ແລະ ນັກທຸລະກິດ.

2. ການຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ.

ຕະຫຼອດໄລຍະ 5 ປີຂອງສະພາແຫ່ງຊາດຊຸດທີIX, ກອງປະຊຸມສະໄໝສາມັນ ແລະ ວິສາມັນຂອງສະພາແຫ່ງຊາດ ໄດ້ມີການພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ໄດ້ທັງໝົດ 87 ສະບັບ ໃນຈຳນວນ 96 ສະບັບ ທີ່ວາງໄວ້ໃນແຜນການ ເທົ່າກັບ 90.6% ຂອງແຜນການ 5 ປີ, ເຮັດໃຫ້ກົດໝາຍມີຄວາມເປັນລະບົບຄົບຊຸດເທື່ອລະກ້າວ. ມາຮອດປັດຈຸບັນ, ປະເທດເຮົາມີກົດໝາຍທັງໝົດ 176 ສະບັບ ໄດ້ເປັນບ່ອນອີງໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ; ອັນພົ້ນເດັ່ນແມ່ນສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງເອົາລັດຖະທຳມະນູນສະບັບປັບປຸງປີ2025ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງລະບົບອຳນາດລັດ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ, ມີຄວາມສອດຄ່ອງກັບສະພາບການໃນໄລຍະໃໝ່ ເຊິ່ງໃນນັ້ນ ກໍໄດ້ປັບປຸງການເຄື່ອນໄຫວຂອງລະບົບການປົກຄອງທ້ອງຖິ່ນໃຫ້ສອດຄ່ອງກັບຄວາມຕ້ອງການແຫ່ງການພັດທະນາ.

ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳວຽກງານການສ້າງ ແລະ ປັບປຸງກົດໝາຍ ໃຫ້ຮັບປະກັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກທີ່ວາງອອກໃນແຕ່ລະໄລຍະ ເພື່ອກຳນົດເປັນເນື້ອໃນຂອງກົດໝາຍແລະວາງມາດຕະການທາງກົດໝາຍ ແນໃສ່ເຮັດໃຫ້ແນວທາງໄດ້ຮັບການຈັດຕັ້ງປະຕິບັດ; ຕິດຕາມຊຸກຍູ້ການສ້າງ ແລະ ປັບປຸງກົດໝາຍໃຫ້ໄປຕາມແຜນການທີ່ວາງໄວ້, ໃຫ້ໄປຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ; ສ້າງເງື່ອນໄຂໃຫ້ສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໄດ້ເຂົ້າຮ່ວມຂະບວນການສ້າງ ແລະ ປັບປຸງກົດໝາຍ ເພື່ອນຳເອົາຄວາມຄິດຄວາມເຫັນ, ຂໍ້ສະເໜີ, ບັນຫາຕ່າງໆ ທີ່ເປັນຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າມາກຳນົດເຂົ້າເນື້ອໃນຂອງກົດໝາຍ, ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢ່າງແທ້ຈິງ; ເອົາໃຈໃສ່ນຳຮ່າງກົດໝາຍ ໄປທາບທາມ, ຮັບຟັງຄວາມຄິດຄວາມເຫັນຂອງພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນລາວບັນດາເຜົ່າ ເພື່ອເຮັດໃຫ້ກົດໝາຍມີຄວາມສອດຄ່ອງກັບສະພາບຕົວຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາຫຼາຍຂຶ້ນ. ພ້ອມກັນນັ້ນ, ສະພາແຫ່ງຊາດ ໄດ້ເອົາໃຈໃສ່ຕິດຕາມ, ຊຸກຍູ້ລັດຖະບານ, ກະຊວງ, ອົງການ ໃນການຜັນຂະຫຍາຍບັນດາມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກນິຕິກຳໃຕ້ກົດໝາຍ ໄດ້ອອກເປັນນິຕິກຳໃຕ້ກົດໝາຍຢ່າງຄົບຖ້ວນເພື່ອເຮັດໃຫ້ການປະຕິບັດກົດໝາຍ, ເຂົ້າໃຈເນື້ອໃນຂອງກົດໝາຍ ເປັນຮູບປະທຳຫຼາຍຂຶ້ນ ທັງສຶກສາອົບຮົມສະຕິສັງຄົມ ໃນການເຄົາລົບປະຕິບັດກົດໝາຍ, ເຮັດໃຫ້ກົດໝາຍນັບມື້ມີຄວາມສັກສິດ.

3. ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ IV ໄດ້ປະກອບສ່ວນສຳຄັນແນວໃດແດ່ ໃຫ້ການພັດທະນາເສດຖະກິດ-ສັງຄົມໃນແຜນພັດທະນາແຫ່ງຊາດ ຄັ້ງທີ IX?

ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ IV ໄດ້ຮັບການເລືອກຕັ້ງໃນວັນທີ 21 ກຸມພາ 2021 ເຊິ່ງເປັນໄລຍະທີ່ສະພາບການຂອງພາກພື້ນ ແລະ ໂລກມີການຜັນແປໄປຢ່າງສັບສົນ ເປັນຕົ້ນການປະທະທາງທະຫານຢູ່ບາງຈຸດຂອງໂລກ, ການລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະເທດຕ່າງໆໃນໂລກ ລວມທັງປະເທດເຮົາ; ແຕ່ດ້ວຍຄວາມເອົາໃຈໃສ່ນຳພາຂອງສູນກາງພັກ, ຄວາມເປັນເຈົ້າການແລະບຸກບືນສູ້ຊົນຂອງຄະນະປະຈຳສະພາແຫ່ງຊາດ, ການປະສານສົມທົບຢ່າງກົມກຽວຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເຮັດໃຫ້ການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ເຂົ້າໃນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ໂດຍຜ່ານການດຳເນີນກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນຂອງສະພາແຫ່ງຊາດ ໄດ້ຈຳນວນ 12 ຄັ້ງ, ມີຈຳນວນ 196 ເນື້ອໃນ ແລະ ຮັບຮອງອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ໄດ້ຈຳນວນ 106 ສະບັບ ເຊິ່ງສ່ອງແສງໃຫ້ເຫັນເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າແລະເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ລັດຖະບານ, ອົງການຈັດຕັ້ງກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ.

ສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາແລະຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ. ພິເສດ ສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນກອງປະຊຸມສະໄໝວິສາມັນ ເພື່ອພິຈາລະນາຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມແນວທາງນະໂຍບາຍຂອງພັກ ລວມທັງການພິຈາລະນາຮັບຮອງເອົາການປັບປຸງກົດໝາຍຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ຕາມແນວທາງນະໂຍບາຍຂອງພັກ ແລະ ສອດຄ່ອງກັບສະພາບການໄລຍະໃໝ່.

ສະພາປະຊາຊົນຂັ້ນແຂວງທົ່ວປະເທດ ກໍໄດ້ຕັ້ງໜ້າປະຕິບັດພາລະບົດບາດຂອງຕົນ ໃນການດຳເນີນກອງປະຊຸມສະໄໝສາມັນ ຕາມກົດໝາຍກຳນົດ ເພື່ອພິຈາລະນຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນຕົນ; ດຳເນີນກອງປະຊຸມສະໄໝວິສາມັນເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນຮີບດ່ວນຂອງທ້ອງຖິ່ນໃນແຕ່ລະໄລຍະ.

ສະພາປະຊາຊົນຂັ້ນແຂວງ ກໍໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການພິຈາລະນາຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໃນການບໍລິຫານວຽກງານຂອງທ້ອງຖິ່ນຕົນ ທັງເປັນການຍົກບົດບາດຂອງສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ສູງຂຶ້ນ.

ບັນດາສະມາຊິກສະພາແຫ່ງຊາດຊຸດທີIX ໄດ້ມີຄວາມຫ້າວຫັນໃນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນກັບການປະຕິບັດສອງວາລະແຫ່ງຊາດ; ການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດ, ການພັດທະນາໂຄງລ່າງພື້ນຖານເສັ້ນທາງຄົມມະນາຄົມຂົນສົ່ງ, ການຊຸກຍູ້ສົ່ງເສີມການຜະລິດກະສິກຳ ເພື່ອຊົມໃຊ້ພາຍໃນ ແລະ ຫຼຸດຜ່ອນການນຳເຂົ້າ; ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ວຽກງານ 3 ສ້າງ ແລະ ອື່ນໆ ດ້ວຍຫຼາຍຮູບແບບ ທັງການຕິດຕາມກວດກາດ້ວຍການຈັດກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ; ຍັງມີການຕິດຕາມກວດກາຢູ່ໃນກອງປະຊຸມສະພາແຫ່ງຊາດ ດ້ວຍການຊັກຖາມ, ການປະກອບຄຳເຫັນ ແລະ ທັງໄດ້ມີການແຕ່ງຕັ້ງຄະນະສະເພາະກິດລົງຕິດຕາມກວດກາ ແລະ ມີການຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນທີ່ສົ່ງເຖິງກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວສັງລວມໃຫ້ບັນດາພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ.

ສະພາປະຊາຊົນຂັ້ນແຂວງ ໄດ້ມີຄວາມເອົາໃຈໃສ່ຍົກສູງບົດບາດການເຄື່ອນໄຫວຕິດຕາມກວດກາຕາມກົດໝາຍກຳນົດ ດ້ວຍການເຂົ້າຮ່ວມປະກອບໃນຄະນະຕິດຕາມກວດກາຂອງສະພາແຫ່ງຊາດ ທີ່ເຄື່ອນໄຫວຢູ່ແຕ່ລະທ້ອງຖິ່ນ, ມີການຕິດຕາມກວດກາຢູ່ກອງປະຊຸມສະພາປະຊາຊົນຂັ້ນແຂວງແຕ່ລະຄັ້ງ, ມີການຮັບຄຳຮ້ອງທຸກຂໍຄວາມເປັນທຳ, ຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນຫາກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງໃນເຂດເລືອກຕັ້ງຕ່າງໆ ໄດ້ມີການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ຈຸດຕ່າງໆ ເພື່ອໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ຜົນສຳເລັດຂອງການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແຕ່ລະຄັ້ງ, ປຸກລະດົມປະຊາຊົນລາວບັນດາເຜົ່າ ໃນການເຂົ້າຮ່ວມເຊື່ອມຊຶມແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດ

ອ່ານຕໍ່ໜ້າ 8




# ມິດສາຊີບໃນຄາບນັກບຸນ

**# ດັ້ນກົບເມກ**

ພວກມິດສາຊີບໃນຄາບນັກບຸນ ກໍຖືວ່າຈັດຢູ່ໃນປະເພດມືຖືສາກປາກຖືສິນ, ປາກເປັນທຳ ແຕ່ຫົວໃຈເປັນມານ ເຊິ່ງປາກົດມີບາງອາຊີບ ແລະ ບາງປະເພດກຸ່ມຄົນ ທີ່ຮ່ວມຫົວກັນເປັນທີມຫາກິນເປັນວົງຈອນອູ້ມຊູກັນ ແລະ ເຊຍກັນໄປມາ ຫຼອກລວງພວກບໍ່ຮູ້ທັນຫຼົ່ງມ ຫຼື ພວກສັດທາຕື້ນ; ການຫາກິນນຳຄວາມເຊື່ອຂອງຄົນໃນສັງຄົມນີ້ໜ້າຄິດ, ບາງໜ່ວຍງານກໍບໍ່ສາມາດປາບປາມກຳຈັດປັດເປົ່າໄດ້ ເພາະພວກນີ້ກິນກັນເປັນທີມ ຜີບ້ານພ້ອມຜີປ່າ...

ມິດສາຊີບ ບາງເທື່ອກໍມາໃນຄາບຜູ້ສ້າງສັດທາ ມີທັງນັກບຸນນັກບວດ, ບາງຄົນ ບາງກຸ່ມອາໄສວ່າຄົນໃນສັງຄົມສັດທາ ຍິ່ງໄດ້ໂອກາດແຜ່ຊ່ອງໂຄສະນາ, ສ້າງເປັນຂະບວນການ ທັງມີແຜນປະຈຳເດືອນ, ແຜນປະຈຳປີ ແລະ ແຜນໄລຍະຍາວ ປານວ່າແຜນພັດທະນາຂອງລັດຖະບານພຸ້ນນໍ! ກະແສພັດທະນາທີ່ມີການປ່ຽນແປງຢ່າງວ່ອງໄວຂອງໂລກທຸກມື້ນີ້ພາໃຫ້ຈິດໃຈຄົນປ່ຽນແປງຫຼາຍເພາະໃຈຄົນເລີ່ມເຫັນຄຸນຄ່າວັດຖຸ ແລະ ເຊີດຊູຄົນຜູ້ມີວັດຖຸຊັບສິນເງິນຄຳຫຼາຍກວ່າສິນທຳປະຈຳໃຈ ເນື່ອງຈາກວ່າມີຄ່ານິຍົມວ່າສິນທຳກິນບໍ່ໄດ້ ຈຶ່ງພາໃຫ້ສິນທຳໃນໃຈຄົນຖືກປົກຫຸ້ມທົດຫາຍ ດ້ວຍຄຸນຄ່າວັດຖຸຢ່າງຮຸນແຮງ.

ມິດສາຊີບຍັງມີປະເພດທີ່ເອົາໜ້າຕາຊື່ສຽງຄົນອື່ນໄປຂາຍກິນ ແລະ ເອົາຄວາມທຸກຍາກຂາດເຂີນ, ໄພພິບັດເປັນເຄື່ອງມືໃນການຫາກິນເຂົ້າຖົງຂອງບາງກຸ່ມຄົນທີ່ມີເລ່ຫຼ່ຽມ ເຮັດເປັນທີມງານແບບວ່າມີໜ້າມ້າ ປານນາຍໜ້າຊື້ຂາຍດິນພຸ້ນເດີ!.

ຜູ້ຂຽນພຽງຢາກເຕືອນໃຫ້ສັງຄົມຄິດຄັກໆ ຊ່ວຍກັນເປີດໂປງພຶດຕິກຳບໍ່ດີ, ຊ່ວຍກັນກີດກັນ ແລະ ປ້ອງກັນ ເພື່ອບໍ່ໃຫ້ຫຼາຍຄົນຕົກເປັນເຫຍື່ອນຳພວກເອົາສັດທາໄປຂາຍກິນ ເພາະບາງເທື່ອ ຄົນພວກສີເທົານີ້ ກໍນຳໃຊ້ນາຣີກ-ສະຫວັນ ເປັນເຄື່ອງມືໂຄສະນາເອົາເງິນເຂົ້າຖົງພຸ້ນເດີ! ສະເໜີແລກປ່ຽນ.

## ບົດຄຳເຫັນ...

(ຕໍ່ຈາກໜ້າ 7)

ໝາຍແລະບັນດານິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ.

ສະພາແຫ່ງຊາດ ຊຸດທີ IX ໄດ້ຖືສຳຄັນການເຄື່ອນໄຫວວຽກງານການຕ່າງປະເທດ ອັນພົ້ນເດັ່ນແມ່ນການເຄື່ອນໄຫວຢ້ຽມຢາມແລກປ່ຽນບົດຮຽນກັບລັດຖະສະພາຕ່າງປະເທດ, ເຂົ້າຮ່ວມກອງປະຊຸມລະດັບຕ່າງໆໃນພາກພື້ນ ແລະ ສາກົນ, ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ສປປລາວ, ເຂົ້າຮ່ວມງານສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ-ສາກົນ; ພິເສດ, ສະພາແຫ່ງຊາດລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ(AIPA)ຄັ້ງທີ 45 ໃນທ້າຍປີ 2024 ແລະ ກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ຢູ່ ສປປລາວ ໃນທ້າຍປີ 2023.

4. ທ່ານມີຄຳຮຽກຮ້ອງຫຍັງແດ່ໃນໂອກາດກະກຽມໃຫ້ແກ່ການເລືອກຕັ້ງຄັ້ງນີ້?

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ແມ່ນການນຳໃຊ້ສິດປະຊາທິປະໄຕຂອງປະຊາຊົນບັນດາເຜົ່າ ຕາມແນວທາງນະໂຍບາຍຂອງພັກເຂົ້າໃນການບູລະນະລັດປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ; ເປັນການນຳໃຊ້ສິດຂອງພົນລະເມືອງຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ. ສະນັ້ນ, ການເລືອກຕັ້ງໃນວັນທີ22ກຸມພາ 2026 ຈຶ່ງຂໍໃຫ້ປະຊາຊົນລາວບັນດາເຜົ່າ ຖືເປັນໜ້າທີ່ການເມືອງທີ່ສຳຄັນ ທີ່ຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້:

(1)ຂໍໃຫ້ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ມີອາຍຸຄົບ 18 ປີຂຶ້ນໄປ ພ້ອມກັນໄປໃຊ້ສິດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຢ່າງພ້ອມພຽງຮຽງໜ້າ ເຮັດໃຫ້ການເລືອກຕັ້ງໃນວັນທີ 22 ກຸມພາ 2026 ກາຍເປັນປາງບຸນໃຫຍ່ຂອງຊາດແລະສາມາດດຳເນີນໄປຢ່າງເປັນຂະບວນຟົດຟື້ນ ເພື່ອເລືອກຕັ້ງເອົາຜູ້ແທນທີ່ດີເດັ່ນຄົບມາດຕະຖານເງື່ອນໄຂ, ເຮັດໃຫ້ການເລືອກຕັ້ງຄັ້ງນີ້ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

(2) ທຸກໆຄະແນນສຽງຂອງພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງ ແມ່ນມີຄວາມໝາຍຄວາມສຳຄັນຕໍ່ການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ຈຶ່ງຂໍໃຫ້ຜູ້ມີສິດເລືອກຕັ້ງ ຂີດໝາຍບັດລົງຄະແນນສຽງເລືອກຕັ້ງໃຫ້ຖືກຕ້ອງຕາມລະບຽບການເລືອກຕັ້ງຮ້ອຍສ່ວນຮ້ອຍ, ບໍ່ໃຫ້ມີບັດຕາຍ ຈຶ່ງຈະເຮັດໃຫ້ທຸກຄະແນນສຽງໄດ້ເປັນສ່ວນປະກອບສຳຄັນໃຫ້ແກ່ການບູລະນະລັດປະຊາທິປະໄຕປະຊາຊົນຢ່າງແທ້ຈິງ.

(3) ສະເໜີໃຫ້ຄະນະກຳມະການເລືອກຕັ້ງທຸກຂັ້ນ, ອຳນາດການປົກຄອງທຸກຂັ້ນ ນຳພາການປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນກຳນົດເວລາຮ້ອຍສ່ວນຮ້ອຍ; ພ້ອມກັນນັ້ນ, ຂໍໃຫ້ປະຊາຊົນລາວບັນດາເຜົ່າ ຈົ່ງພ້ອມກັນຍົກສູງສະຕິລະວັງຕົວ, ພ້ອມກັນເປັນເຈົ້າການປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນວັນເລືອກຕັ້ງ ໃຫ້ຮັບປະກັນຄວາມສະຫງົບປອດໄພຮ້ອຍສ່ວນຮ້ອຍ.

ໃນໂອກາດທ້າຍນີ້, ຂ້າພະເຈົ້າ ຂໍຮຽກຮ້ອງໃຫ້ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າທຸກທົ່ວໜ້າ ຈົ່ງພ້ອມໃຈນັດໝາຍພົບກັນຢູ່ໜ່ວຍປ່ອນບັດເລືອກຕັ້ງ ໃນວັນທີ 22 ກຸມພາ 2026 ເພື່ອນຳໃຊ້ສິດປະຊາທິປະໄຕອັນມີຄ່າຂອງຕົນ ເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ປະຕິບັດໜ້າທີ່ແທນຕົນຢູ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອນຳເອົາຜົນປະໂຫຍດມາສູ່ປະເທດຊາດກໍຄືປະຊາຊົນລາວບັນດາເຜົ່າ.

**(ຂໍຂອບໃຈ)**



## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ໂດຍການເປັນປະທານຂອງທ່ານ ນວນທອງ ສຸວັນວິໄຊ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ (ສພຊ), ເຂົ້າຮ່ວມມີຄະນະຫ້ອງວ່າການສະພາປະຊາຊົນ8ແຂວງ ຄື: ຫຼວງພະບາງ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ ພ້ອມດ້ວຍຕາງໜ້າພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງຫຼວງພະບາງ, ພະນັກງານ-ລັດຖະກອນພາຍໃນ ສພຊ ແລະ ສະພາປະຊາຊົນ 8 ແຂວງ.

ທ່ານ ນວນທອງ ສຸວັນວິໄຊ ໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ເພື່ອຍົກລະດັບຄວາມຮູ້ພະນັກງານຜູ້ເຮັດວຽກງານສາຍດ່ວນ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງກ່ຽວກັບການເປັນເສນາທິການໃນການຮັບຜິດຊອບວຽກງານສາຍດ່ວນແນໃສ່ເຮັດໃຫ້ມີທັດສະນະຫຼັກໝັ້ນ, ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນຈັນຍາທຳໃນການປະຕິບັດໜ້າທີ່ວຽກງານດັ່ງກ່າວເປັນຢ່າງດີ; ບັນດາຜູ້ເຂົ້າຮ່ວມ ຈະໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນເພື່ອເປັນບ່ອນອີງໃນການປັບປຸງຮ່າງຄູ່ມືການເຄື່ອນໄຫວວຽກງານສາຍດ່ວນ. ພ້ອມນີ້, ທ່ານ ນວນທອງ ສຸວັນວິໄຊ ຍັງໄດ້ເຜີຍແຜ່ມະຕິວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນ156ເຊິ່ງເປັນນິຕິກຳທີ່ສຳຄັນ, ເປັນບ່ອນອີງໃນການເຄື່ອນໄຫວວຽກງານສາຍດ່ວນ ໂດຍທ່ານໄດ້ຍົກໃຫ້ເຫັນບາງເນື້ອໃນສຳຄັນຢູ່ບາງໝວດ, ບາງມາດຕາຂອງມະຕິດັ່ງກ່າວ ເຊິ່ງມະຕິສະບັບນີ້ ໄດ້ກຳນົດຫຼັກການ, ຂັ້ນຕອນ, ວິທີການ ແລະ ຄວາມຮັບຜິດຊອບວຽກງານສາຍດ່ວນ ເປັນຕົ້ນ: ການປະສານງານໃນການຕິດຕາມການແກ້ໄຂຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ໃຫ້ຖືກຕ້ອງ, ທັນເວລາ ແລະ ຍຸຕິທຳ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ.

ໃນກອງປະຊຸມ, ບັນດາວິທະຍາກອນໄດ້ນຳສະເໜີຄວາມຮູ້ພື້ນຖານກ່ຽວກັບວຽກງານສາຍດ່ວນ 156 ຂອງສະພາແຫ່ງຊາດ ໂດຍຍົກໃຫ້ເຫັນພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບທີ່ສຳຄັນສຳລັບເປັນເສນາທິການໃຫ້ຂັ້ນເທິງ ໃນການຈັດຕັ້ງປະຕິບັດວຽກງານສາຍດ່ວນ ເປັນຕົ້ນ: ໄດ້ເນັ້ນທັກສະການສົນທະນາໃນເວລາຟັງ, ບັນທຶກ, ສັງລວມຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອໃຫ້ພະນັກງານຜູ້ຮັບຜິດຊອບວຽກດັ່ງກ່າວ ສາມາດບັນທຶກ, ສັງລວມເນື້ອໃນໃຫ້ຄົບຖ້ວນ, ຖືກຕ້ອງຕາມຈຸດປະສົງຂອງຜູ້ໂທ, ພາຍໃຕ້ເຫດການ ແລະ ເຫດຜົນຕາມຄວາມເປັນຈິງ, ກະທັດຮັດ, ຖືກຫຼັກໄວຍາກອນ, ຕາມຈຸດປະສົງຂອງປະຊາຊົນ ແນໃສ່ເຮັດໃຫ້ຜູ້ອ່ານເຂົ້າໃຈງ່າຍ, ສາມາດນຳສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂບັນຫາໄດ້ຖືກຕ້ອງ ແລະ ທັນເວລາ; ການຮ່າງບົດລາຍງານໃນການແຈ້ງຕອບຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ 156 ເພື່ອລາຍງານຂັ້ນເທິງ, ການກວດກາເນື້ອໃນ, ຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ, ແຍກຂົງເຂດ, ການເຮັດປຶ້ມປະມວນແລະນຳສົ່ງຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ ໃຫ້ພາກສ່ວນກ່ຽວຂ້ອງເພື່ອພິຈາລະນາແກ້ໄຂ; ນອກນີ້, ຍັງໄດ້ຜ່ານຮ່າງຄູ່ມືການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ). ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ແລກປ່ຽນບົດຮຽນ ແລະ ສຸມໃສ່ປັບປຸງຮ່າງຄູ່ມືດັ່ງກ່າວໃຫ້ສຳເລັດຕາມແຜນການ ເພື່ອນຳໄປເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານສາຍດ່ວນ ໃຫ້ເປັນເອກະພາບກັນທັງຢູ່ພາຍໃນ ສພຊ ແລະ ສພຂ ເພື່ອສະໜອງຂໍ້ມູນໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງນຳເອົາຄຳສະເໜີຂອງປະຊາຊົນ ໄປປະສານສົມທົບກັບພາກສ່ວນກ່ຽວຂ້ອງ ພິຈາລະນາ, ແກ້ໄຂໃຫ້ຖືກຕ້ອງ, ທັນເວລາ ແລະ ຍຸຕິທຳ ແນໃສ່ປົກປ້ອງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ.

ໂອກາດເຂົ້າຮ່ວມກອງປະຊຸມໃນວັນທີ 24 ມັງກອນ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ເນັ້ນໃຫ້ຜູ້ເຂົ້າຮ່ວມ ເລັ່ງປັບປຸງຮ່າງຄູ່ມືການເຄື່ອນໄຫວວຽກງານສາຍດ່ວນໃຫ້ສຳເລັດຕາມເປົ້າໝາຍ; ພ້ອມທັງມີຄຳເຫັນຊີ້ນຳຫຼາຍບັນຫາສຳຄັນຕໍ່ຄະນະຫ້ອງວ່າການສະພາປະຊາຊົນ 8 ແຂວງ ໂດຍສະເພາະເພີ່ມທະວີການປະສານສົມທົບກັບພະແນກການທີ່ກ່ຽວຂ້ອງຂອງແຂວງ ຕະຫຼອດຮອດບັນດາເມືອງ ແລະ ບ້ານທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາຕາມຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນໃຫ້ວ່ອງໄວແລະເປັນຮູບປະທຳ. ພ້ອມນີ້, ຄະນະຮັບຜິດຊອບ, ກອງເລຂາຂອງກອງປະຊຸມໃຫ້ພ້ອມກັນສືບຕໍ່ສຸມໃສ່ປັບປຸງຮ່າງຄູ່ມືການເຄື່ອນໄຫວວຽກງານສາຍດ່ວນ ໃຫ້ສຳເລັດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວທັງພາຍໃນ ສພຊ ແລະ ສພຂ ໃຫ້ມີຄວາມເປັນເອກະພາບກັນ ເປັນຕົ້ນ: ເບິ່ງຄືນເນື້ອໃນບາງມາດຕາທີ່ຂຽນບໍ່ທັນຈະແຈ້ງ, ບໍ່ທັນກວມລວມຮອດສະພາປະຊາຊົນຂັ້ນແຂວງ ແລະ ບັນຫາໃດທີ່ຍັງຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ເຊັ່ນ: ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນໃນການພິຈາລະນາ, ແກ້ໄຂຄຳສະເໜີຂອງປະຊາຊົນ ໃຫ້ລະບຸແຈ້ງຢູ່ໃນຄູ່ມືດັ່ງກ່າວ ໂດຍສະເພາະໃຫ້ກຳນົດເປັນຄວາມຮັບຜິດຊອບຂອງກະຊວງ, ອົງການ ແລະ ພະແນກການຂອງແຂວງ ມາຕອບບັນຫາທີ່ເຄັ່ງຮ້ອນ ຫຼື ມີຜົນກະທົບຕໍ່ປະຊາຊົນ ຜ່ານສື່ມວນຊົນ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ.



## ສຸຂະສະບາຍຫາຍໂຣຄ

# ໝາກກ້ວຍຊ່ວຍປ້ອງກັນພະຍາດ

# ຮຽບຮຽງໂດຍ: ສາວໄອທີ



ໝາກກ້ວຍ ອຸດົມໄປດ້ວຍຄຸນຄ່າທາງສານອາຫານ ແລະ ໂພຊະນາການ ໂດຍໃນ 1 ໜ່ວຍ ໃຫ້ພະລັງງານປະມານ 150 ແຄຣລໍລີ ພ້ອມທັງຍັງມີວິຕາມິນບີ 6, ວິຕາມິນ C, ໂພແທັກຊຽມ, ທາດເຫຼັກ, ແມັກນີຊຽມ, ແມງການີສ ແລະ ໃຍອາຫານສູງ;ພ້ອມນັ້ນ,ຍັງມີສັບພະຄຸນຊ່ວຍປ້ອງກັນພະຍາດໄດ້ດັ່ງນີ້:

**ພະຍາດເລືອດຈາງ:** ໝາກກ້ວຍເປັນໝາກໄມ້ທີ່ມີທາດເຫຼັກຫຼາຍ ທາດເຫຼັກນີ້ຈະໄປຊ່ວຍກະຕຸ້ນການຜະລິດເຮໂມໂກລບິນໃນເມັດເລືອດ ຊ່ວຍໃຫ້ຄົນທີ່ເປັນພະຍາດເລືອດຈາງກັບມາແຂງແຮງຄືເກົ່າ.

**ພະຍາດຄວາມດັນເລືອດສູງ:** ໝາກກ້ວຍມີໂພແທັກຊຽມຫຼາຍທີ່ສຸດ ຈຶ່ງຫຼຸດຄວາມດັນເລືອດໄດ້ດີຫຼາຍ ອີງການອາຫານຂອງສະຫະລັດ ໂຄສະນາໃຫ້ປະຊາຊົນທີ່ເປັນພະຍາດຄວາມດັນເລືອດທັງຫຼາຍກິນໝາກກ້ວຍໃຫ້ຫຼາຍໆ.

**ອາການຖ່າຍຍາກ:** ເສັ້ນໃຍອາຫານຈາກໝາກກ້ວຍຈະເປັນຕົວຊ່ວຍໃນການຂັບຖ່າຍ.

**ພະຍາດຊຶມເສົ້າ:** ອາການຊຶມເສົ້າມັກເກີດຈາກສານເຄມີໃນສະໝອງບໍ່ສົມດຸນ ແຕ່ຈາກການວິໄຈພົບວ່າ ໝາກກ້ວຍມີໂປຣຕີນຊື່ ໄທຣໂພໂຕແຟນ ທີ່ຈະກະຕຸ້ນໃຫ້ສະໝອງຫຼັ່ງຮໍໂມນທີ່ຊ່ວຍໃຫ້ຮູ້ສຶກຜ່ອນຄາຍອອກມາ.

**ອາການເມົາຄ້າງ:** ໝາກກ້ວຍປັ່ນກັບນົມ ແລະ ນ້ຳເຜິ້ງ ຄືຢາແກ້ເມົາໄດ້ດີ.

**ອາການທ້ອງຮ້ອງ:** ໝາກກ້ວຍມີສານຫຼຸດກົດຕາມທຳມະຊາດ ຖ້າຄົນທີ່ເປັນອາການທ້ອງຮ້ອງເພາະມີກົດເກີນໃນກະເພາະກິນໝາກກ້ວຍມື້ລະໜ່ວຍຈະຮູ້ສຶກດີຂຶ້ນ.

**ລຳໄສ້ເປັນບາດແຜ:** ເພາະເນື້ອທີ່ນຸ່ມຂອງມັນບໍ່ລະຄາຍເຄືອງຕໍ່ກະເພາະອາຫານ ແລະ ຍັງມີສັບພະຄຸນເຄືອບພະໜັງລຳໄສ້ ແລະ ຊ່ວຍປິ່ນປົວບາດແຜໃຫ້ເຊົາໄດ້ໄວຂຶ້ນ

**ເສັ້ນເລືອດຝອຍແຕກ:** ມີການວິໄຈວ່າ ການກິນໝາກກ້ວຍເປັນປະຈຳ ສາມາດຫຼຸດອັນຕະລາຍທີ່ເກີດຂຶ້ນກັບເສັ້ນເລືອດແຕກໄດ້ເຖິງ 40%.

**ຂໍ້ມູນຈາກ:**
**www.laopost.com**



## ອາດ ກະວີລາວ

# ກຳມະບານລາວກ້າວໄປ

# ນາງ ກິ່ງໃຈ ແສງອຳພັນ

❊ 1 ກຸມພາ ປະກາດກ້ອງ
ຊາວຜູ້ອອກແຮງງານ
ມີຜູ້ນຳພາສູ້
ຫຼຸດຜ່ອນການຮັບໃຊ້

ວັນແຫ່ງກຳມະບານລາວ
ຊື່ນບານຫົວຍິ້ມ
ທວງສິດທິມະນຸດ
ທີ່ບໍ່ເຄີຍໄດ້ຄ່າແຮງ

❊ ເມື່ອກ່ອນນາຍທຶນໃຈແຫ້ງແລ້ງ
ຂຸມເຈົ້ານາຍເລືອດເຢັນ
ຫາກວ່າໃຜທວງຄືນ
ພວກເຂົາຂົ່ມຂູ່ຂ້າ

ເກີນກວ່າທະເລຊາຍ
ຂູ່ເຂັນຈາຂ້າ
ສິດຕົນນາມມະນຸດ
ຫາກໃຜອ້າເອີ່ຍຂໍ

❊ ຕໍ່ມາໂຮມກຸ່ມກ້ອນ
ພັກປະຊາເປັນແກນນຳ
ມະຕິຕົກລົງແຈ້ງ
ເຮັດວຽກແປດຊົ່ວໂມງຕໍ່ມື້

ທວງປະໂຫຍດທີ່ຄວນມີ
ດຸ່ງເດີນພາສູ້
ຖະແຫຼງການປະກາດເດັ່ນ
ຄ່າແຮງໄດ້ຕອບແທນ

❊ ຍ້ອນວ່າມີພັກຊີ້
ຍືນຍົງກ້າວໄປ
ຕັ້ງແຕ່ເໜືອເຖິງໃຕ້
ກຳມະບານພ່ຳພ້ອມ

ລາວຈຶ່ງຮຸ່ງເຮືອງໃສ
ຄູ່ປະຊາຊາວເຊື້ອ
ປະຊາລາວຫວັງເພິ່ງ
ຜູ້ນຳກ້າພັກປະຊາ

❊ 1 ກຸມພາ ຜ່ານພົ້ນ
ຂໍໃຫ້ມີພະລັງ
ປະຊາຊາວທຸກຖ້ວນໜ້າ
ມີຄວາມສຸກສືບສ້າງ

ຄົບຮອບ 70 ປີ
ເຫື່ອແຮງແຂງກ້າ
ໂຣຄາຢ່າບຽນບຽດ
ຊາດລາວກ້າວພັດທະນາ ຊອບແລ້ວ!



## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄິ່ງພິທີການ)

# ສຽມທ້ຽນ

❊ **ຊົມ**ເຊີຍວັນສ້າງຕັ້ງສະຫະພັນກຳມະບານລາວທີ່ໄດ້ໝູນວຽນມາບັນຈົບ ຄົບຮອບ **70 ປີ** (1 ກຸມພາ 1956-1 ກຸມພາ 2026) 70 ປີກໍ່ຕັ້ງ ສະຫະພັນກຳມະບານລາວ ຕົວແທນຊາວຜູ້ອອກແຮງງານ ທີ່ອຫາບືແຄ້ບ ຮ່ວອຍພອບໄຊກ້າ ການນຳພາທຸກພາກສ່ວນ ທັງປວງຊົນລາວພີ່ນ້ອງແຂງໝັ້ນສຸກສີລ້າ **ຊອບແລ້ວ!**

❊ **ວັນ**ທີ 25 ຜ່ານມາ ຄະນະກຳມະການເລືອກຕັ້ງລະດັບຊາດ ຫຼື ເອີ້ນວ່າ: **ຄລຊ** ໄດ້ປະກາດແຈ້ງ ຖະແຫຼງຂ່າວເປັນທາງການ ຕາມມາດຖານວາງເລືອກສັນມາໄດ້ ຕາມແຕ່ລະເຂດເລືອກຕັ້ງ ລວມກັບທົ່ວປະເທດ ມີຜູ້ສະໝັກໄດ້ **ສອງຮ້ອຍສີ່ສາມ ພຸ້ນວ່າ** (ຊົມເຊີຍ) ເຊີນເດີພົງພີ່ນ້ອງ ທີ **22 ກຸມພາ** ມາໃຊ້ສິດຕົນ ລັດຖະທຳມະນູນກຳນົດໄວ້ ຢ່າໄດ້ເບົາບອນບົ້ງ ເຕັ້ງສິດດາຍເປົ່າ ເອົາຕົນອອກໄປເລືອກຕັ້ງ ຜູ້ແທນຕົນເອົ້າຢູ່ສະພາ **ເຊີນເດີ!**

## ຊອບຍິ້ມ

# ພົ້ງອຶ້ງ

### ເລື່ອງ: ຕ່ແຄວ

ຊາຍຄົນໜຶ່ງຢຸດລໍ້ຖ້າໄຟສັນຍານຢູ່ສີ່ແຍກໄຟແດງ, ພໍດີເຫັນຂະບວນສົ່ງສະການໂລງສົບສອງໂລງ ແລະ ເຫັນຊາຍໃສ່ຊຸດດຳຈູງໝາ, ມີຄົນຍ່າງນຳຫຼັງປະມານ 50-60 ຄົນ; ລາວແປກໃຈຈຶ່ງຖາມຊາຍໃສ່ຊຸດດຳທີ່ຈູງໝາ ວ່າສົ່ງສະການຜູ້ໃດ?

**ຊາຍຊຸດດຳ:** ສົ່ງສະການແມ່ເຖົ້າກັບເມຍ

**ລາວຈຶ່ງຖາມຕໍ່ວ່າ:** ເປັນຫຍັງຈຶ່ງຕາຍ

**ຊາຍຊຸດດຳ:** ໝາໂຕນີ້ມັນກັດເມຍ,ພໍແມ່ເຖົ້າໄປຊ່ວຍ ມັນກໍກັດແມ່ເຖົ້າຕື່ມຈຶ່ງຕາຍທັງຄູ່

ລາວຢືນຊຶງຄິດຢູ່ບຶດໜຶ່ງ ຈຶ່ງຖາມຕໍ່ວ່າ: ຂ້ອຍຢາກຂໍຢືມໝາເຈົ້າຈັກສອງສາມມື້ໄດ້ບໍ່?

**ຊາຍຊຸດດຳ:** ຖ້າແບບນັ້ນ ກໍມີແຕ່ໄປຕໍ່ແຄວ...!!!



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ອົດສົ້ມຈຶ່ງໄດ້ກິນຫວານ
ອົດທົນທານວຽກງານຈຶ່ງແລ້ວ

ລັດຖະສະພາຕ່າງປະເທດ

# ສະພາສູງອັງກິດອະນຸມັດແຜນການ ຫ້າມເຍົາວະຊົນໃຊ້ສື່ສັງຄົມ

(AFP) - ສະພາສູງອັງກິດ ໄດ້ລົງຄະແນນສຽງເຫັນດີການຫ້າມເດັກອາຍຸຕໍ່າກວ່າ16 ປີ ໃຊ້ສື່ສັງຄົມ ເຊິ່ງເປັນການເພີ່ມຄວາມກົດດັນໃຫ້ລັດຖະບານປະຕິບັດຕາມແບບຢ່າງຈາກກົດໝາຍຂອງອົດສະຕຣາລີ.

ວັນທີ22ມັງກອນຜ່ານມາ, ນາຍົກລັດຖະມົນຕີອັງກິດ ເຄຍສະຕາເມີ(KeirStarmer) ກ່າວວ່າ ເຂົາບໍ່ໄດ້ປະຕິເສດທາງເລືອກອື່ນ ແລະ ສັນຍາວ່າຈະດໍາເນີນການເພື່ອປົກປ້ອງເດັກ, ແຕ່ລັດຖະບານຂອງຕົນຕ້ອງການລໍຖ້າຜົນຂອງການປຶກສາຫາລືທີ່ຈະຈັດຂຶ້ນໃນລະດູຮ້ອນນີ້ກ່ອນທີ່ຈະອອກເປັນກົດໝາຍ.

ສຽງຮຽກຮ້ອງທີ່ດັງຂຶ້ນຈາກທັງຝ່າຍຄ້ານແລະພາຍໃນພັກແຮງງານ ທີ່ເປັນພັກລັດຖະບານ ໃຫ້ອັງກິດປະຕິບັດຕາມອົດສະຕຣາລີເຊິ່ງບັງຄັບໃຊ້ກົດໝາຍຫ້າມເດັກອາຍຸຕໍ່າກວ່າ16 ປີ ໃຊ້ແອັບສື່ສັງຄົມອອນລາຍເມື່ອວັນທີ 10 ທັນວາ 2025.

ຮ່າງກົດໝາຍສະບັບປັບປຸງທີ່ສະເໜີໂດຍ ຈອນ ແນຊ (John Nash) ສະມາຊິກສະພາຕໍ່າຝ່າຍຄ້ານຈາກພັກອະນຸລັກນິຍົມ ໄດ້ຜ່ານການລົງຄະແນນສຽງ 261 ຕໍ່ 150 ໃນສະພາສູງເຊິ່ງມີສະມາຊິກສະພາສູງຈາກພັກແຮງງານ ແລະ ພັກເສລີປະຊາທິປະໄຕບາງຄົນຮ່ວມສະໜັບສະໜູນ; ແນຊ ກ່າວວ່າ ສະມາຊິກສະພາສູງ ໃຫ້ຄວາມສໍາຄັນຕໍ່ອະນາຄົດຂອງເດັກເປັນອັນດັບຕົ້ນ, ການລົງຄະແນນສຽງຄັ້ງນີ້ເປັນການເລີ່ມຕົ້ນຂະບວນການຢຸດຕິຜົນກະທົບຮ້າຍແຮງທີ່ສື່ສັງຄົມອອນລາຍກໍາລັງກໍ່ຂຶ້ນກັບຄົນຮຸ່ນນີ້.

ເຖິງແນວໃດກໍຕາມ, ກ່ອນການລົງຄະແນນສຽງ,ລັດຖະບານອັງກິດລະບຸວ່າ ພວກເຂົາຈະບໍ່ຍອມຮັບການປັບປຸງດັ່ງກ່າວເຊິ່ງຂະນະນີ້ຖືກສົ່ງກັບມາຍັງສະພາຕໍ່າທີ່ພັກແຮງງານຖືສຽງສ່ວນຫຼາຍແລ້ວ ໂດຍສະມາຊິກສະພາຕໍ່າຈາກພັກແຮງງານຫຼາຍກວ່າ 60 ຄົນ ໄດ້ຮຽກຮ້ອງໃຫ້ສະຕາເມີ ສະໜັບສະໜູນແນວທາງການຫ້າມໃຊ້ສື່ສັງຄົມອອນລາຍ.



# ສ.ເກົາຫຼີ ຊາດທໍາອິດຂອງໂລກ ເລີ່ມໃຊ້ກົດໝາຍ AI ເພື່ອເສີມສ້າງຄວາມປອດໄພ



ສູນປະຕິບັດການສຸກເສີນເຊອູນ
ຈຸດຮັບແຈ້ງເຫດສຸກເສີນ (PSAP)

(AFP) - ວັນທີ 22 ມັງກອນຜ່ານມາ, ສ.ເກົາຫຼີ ໄດ້ປະກາດໃຊ້ກົດໝາຍຄວບຄຸມປັນຍາປະດິດ ຫຼື ເອໄອ (AI) ສະບັບໃໝ່ ໂດຍມີຈຸດປະສົງເພື່ອເພີ່ມຄວາມເຊື່ອໝັ້ນ ແລະ ຄວາມປອດໄພໃນຂະແໜງການດັ່ງກ່າວ; ເຖິງຢ່າງໃດກໍຕາມ, ພາກທຸລະກິດເລີ່ມຕົ້ນ ຫຼື "startup" ສະແດງຄວາມກັງວົນວ່າອາດຈະເປັນອຸປະສັກຕໍ່ການເຕີບໂຕ.

ສ.ເກົາຫຼີ ຕັ້ງເປົ້າທີ່ຈະເປັນໜຶ່ງໃນສາມປະເທດມະຫາອໍານາດດ້ານ AI ຂອງໂລກແລະຫວັງວ່າກົດໝາຍສະບັບນີ້ ຈະເຮັດໃຫ້ປະເທດເປັນຜູ້ນໍາໃນຂະແໜງການນີ້, ໂດຍມີຜົນບັງຄັບໃຊ້ໄວກວ່າກົດໝາຍ AI ຂອງສະຫະພາບເອີ ຣົບ ເຊິ່ງກໍາລັງຄ່ອຍໆມີຜົນບັງຄັບໃຊ້ຈົນຮອດປີ 2027.

ພາຍໃຕ້ກົດໝາຍຂອງ ສ.ເກົາຫຼີ, ບໍລິສັດຕ່າງໆ ຕ້ອງກວດສອບໃຫ້ແນ່ໃຈວ່າ AI ທີ່ມີຜົນກະທົບສູງ ຈະຖືກຄວບຄຸມໂດຍມະນຸດ ເຊິ່ງລວມເຖິງຂົງເຂດຕ່າງໆ ເຊັ່ນ: ຄວາມປອດໄພດ້ານນິວເຄລຍ, ການຜະລິດນໍ້າດື່ມ, ການຂົນ ສົ່ງ, ການດູແລສຸຂະພາບ, ແລະ ການນໍາໃຊ້ທາງດ້ານການເງິນ ເຊັ່ນ: ການປະເມີນສິນເຊື່ອ ແລະ ການກວດສອບເງິນກູ້; ລະບຽບການອື່ນໆກໍານົດໃຫ້ບໍລິສັດຕ້ອງແຈ້ງໃຫ້ຜູ້ໃຊ້ຊາບລ່ວງໜ້າກ່ຽວກັບຜະລິດຕະພັນ ຫຼື ບໍລິການທີ່ໃຊ້ AI ທີ່ມີຜົນກະທົບສູງ ຫຼື AI ແບບສ້າງສັນ, ແລະຕ້ອງຕິດປ້າຍຢ່າງຊັດເຈນ ຫາກຜົນໄດ້ຮັບທີ່ສ້າງຂຶ້ນໂດຍ AI ທີ່ຍາກທີ່ຈະແຍກແຍະອອກຈາກຄວາມເປັນຈິງ.

ກົດໝາຍນີ້ ເຊິ່ງ ສ.ເກົາຫຼີ ຢືນຢັນວ່າເປັນສະບັບທໍາອິດຂອງໂລກ ໄດ້ຖືກຮ່າງຂຶ້ນຫຼັງຈາກການປຶກສາຫາລືຢ່າງກວ້າງຂວາງ ແລະ ບໍລິສັດຕ່າງໆ ຈະໄດ້ຮັບໄລຍະເວລາຜ່ອນຜັນຢ່າງໜ້ອຍໜຶ່ງປີກ່ອນທີ່ອົງການທີ່ກ່ຽວຂ້ອງ ຈະເລີ່ມເກັບຄ່າປັບໃໝສໍາລັບການລະເມີດ, ການລົງໂທດອາດຈະລວມເຖິງການບໍ່ຕິດປ້າຍກໍາກັບ AI ແບບສ້າງສັນ ເຊິ່ງອາດຈະສົ່ງຜົນໃຫ້ບໍລິສັດຕ້ອງຖືກປັບໃໝສູງເຖິງ 30 ລ້ານວອນ (ປະມານ 20,722 ໂດລາ).

ຢ່າງໃດກໍຕາມ, ກຸ່ມພັນທະມິດສະຕາດອັບຂອງ ສ.ເກົາຫຼີ ລະບຸວ່າ ພາສາຂອງກົດໝາຍນັ້ນ ຄຸມເຄືອ ແລະ ບໍລິສັດຕ່າງໆ ອາດຈະເລືອກໃຊ້ວິທີການທີ່ປອດໄພແຕ່ຂາດນະວັດຕະກໍາ ເພື່ອຫຼີກລ່ຽງຄວາມສ່ຽງດ້ານກົດລະບຽບ.

# ສະພາຕໍ່າຝຣັ່ງ ຜ່ານຮ່າງກົດໝາຍ ຫ້າມເຍົາວະຊົນໃຊ້ສື່ສັງຄົມ



(AFP) - ສະມາຊິກສະພາແຫ່ງຊາດຝຣັ່ງ ລົງມະຕິຜ່ານຮ່າງກົດໝາຍທີ່ຈະຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 15 ປີໃຊ້ສື່ສັງຄົມອອນລາຍ ເຊິ່ງເປັນການເຄື່ອນໄຫວທີ່ປະທານາທິບໍດີ ເອັມມານູເອວ ມາຄຣົງ (Emmanuel Macron) ຍ້ອງຍໍວ່າເປັນວິທີປົກປ້ອງເດັກຈາກການໃຊ້ເວລາຢູ່ກັບໜ້າຈໍຫຼາຍເກີນໄປ.

ວັນທີ27 ມັງກອນຜ່ານມາ, ສະພາແຫ່ງຊາດ ໄດ້ຮັບຮອງຮ່າງກົດໝາຍດັ່ງກ່າວດ້ວຍຄະແນນ 130 ຕໍ່ 21 ສຽງ ໃນກອງປະຊຸມທີ່ຍາວນານຂ້າມຄືນເຊິ່ງຮ່າງກົດໝາຍຈະຖືກສົ່ງໄປຍັງສະພາສູງກ່ອນທີ່ຈະມີຜົນບັງຄັບໃຊ້ເປັນກົດໝາຍຢ່າງເປັນທາງການ.

ກົດໝາຍສະບັບນີ້ ເຊິ່ງລວມທັງການຫ້າມໂທລະສັບມືຖືໃນໂຮງຮຽນມັດທະຍົມສຶກສາ ຈະເຮັດໃຫ້ຝຣັ່ງເປັນປະເທດທີສອງຂອງໂລກ ທີ່ຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ຫຼັງຈາກອົດສະຕຣາລີໄດ້ຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 16 ປີ ໃຊ້ສື່ສັງຄົມອອນລາຍ ເມື່ອເດືອນທັນວາທີ່ຜ່ານມາ.

ທາງການມີຄວາມກັງວົນວ່າການເຕີບໂຕຂອງສື່ສັງຄົມອອນລາຍ ຈະເຮັດໃຫ້ການໃຊ້ເວລາຢູ່ກັບໜ້າຈໍຫຼາຍເກີນໄປເຊິ່ງສົ່ງຜົນກະທົບທາງລົບຕໍ່ການພັດທະນາຂອງເດັກ ແລະ ກໍ່ໃຫ້ເກີດບັນຫາສຸຂະພາບຈິດ.

ຂະນະທີ່ອະດີດນາຍົກລັດຖະມົນຕີກາບຣຽວອັດຕານ (Gabriel Attal) ເຊິ່ງດໍາລົງຕໍາແໜ່ງຫົວໜ້າພັກເຣີແນຊອງສ໌ (Renaissance) ຂອງ ມາຄຣົງ ໃນສະພາແຫ່ງຊາດກ່າວວ່າເຂົາຫວັງວ່າສະພາສູງຈະຜ່ານຮ່າງກົດໝາຍພາຍໃນກາງເດືອນກຸມພານີ້ເພື່ອໃຫ້ກົດໝາຍມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາ 2026.

# ແຂວງ Tottori ຂອງຍີ່ປຸ່ນ ອອກກົດໝາຍ ລົງໂທດຜູ້ທີ່ບໍ່ລຶບໂພສໝິ່ນປະໝາດ



(Straitstimes) - ກົດໝາຍສະບັບປັບປຸງເຊິ່ງມີຜົນບັງຄັບໃຊ້ເມື່ອວັນອາທິດທີ25ມັງກອນ 2026 ໃນແຂວງທົດໂຕຣິ ທາງພາກຕາເວັນຕົກຂອງຍີ່ປຸ່ນ ອະນຸຍາດໃຫ້ເຈົ້າໜ້າທີ່ສັ່ງໃຫ້ຜູ້ຄົນລຶບໂພສເທິງສື່ສັງຄົມອອນລາຍທີ່ມີເນື້ອຫາໝິ່ນປະໝາດ ຫຼື ມີການເລືອກປະຕິບັດ (ຈໍາແນກ) ແລະ ປັບໃໝສູງສຸດ 50,000 ເຢນ (ປະມານ 320 ໂດລາ)ສໍາລັບຜູ້ທີ່ບໍ່ປະຕິບັດຕາມ.

ກົດໝາຍວ່າດ້ວຍເວທີການເຜີຍແຜ່ຂໍ້ມູນຂ່າວລະດັບຊາດຂອງຍີ່ປຸ່ນ ເຊິ່ງມີຜົນບັງຄັບໃຊ້ໃນເດືອນເມສາ 2025 ກໍານົດໃຫ້ເວທີສື່ສັງຄົມອອນລາຍຕ້ອງຈັດການກັບເນື້ອຫາໝິ່ນປະໝາດ, ແຕ່ບໍ່ໄດ້ໃຫ້ອໍານາດແກ່ເຈົ້າໜ້າທີ່ໃນການອອກຄໍາສັ່ງລຶບ.

ພາຍໃຕ້ກົດໝາຍຂອງແຂວງທົດໂຕຣິເຊິ່ງໄດ້ຮັບການອະນຸມັດ ແລະ ປະກາດໃຊ້ໂດຍສະພາແຂວງ ໃນເດືອນທັນວາ 2025, ປະຊາຊົນສາມາດຂໍໃຫ້ເຈົ້າແຂວງ ຮ້ອງຂໍໃຫ້ບຸກຄົນ ຫຼື ຜູ້ປະກອບການເວັບໄຊລຶບໂພສທີ່ພວກເຂົາເຊື່ອວ່າລະເມີດສິດທິຂອງຕົນ ຫຼື ຜູ້ອື່ນ. ຫຼັງຈາກນັ້ນ, ເຈົ້າແຂວງຈະສົ່ງຕໍ່ຄໍາຮ້ອງທຸກໄປຫາຄະນະຜູ້ຊ່ຽວຊານຊຸດໃຫຍ່ເຊິ່ງປະກອບດ້ວຍນັກວິຊາການທີ່ມີປະສົບການດ້ານສິດທິມະນຸດ ແລະ ໄດ້ຮັບການແຕ່ງຕັ້ງໂດຍເຈົ້າແຂວງ;ພວກເຂົາຈະແນະນໍາໃຫ້ສົ່ງຄໍາຮ້ອງຂໍໃຫ້ລຶບໂພສ ໄປຫາຜູ້ໂພສ ຫຼື ຜູ້ດູແລລະບົບ ຖ້າເຫັນວ່າມີຄວາມຈໍາເປັນ.ຫາກຜູ້ໂພສບໍ່ປະຕິບັດຕາມ, ເຈົ້າແຂວງສາມາດສັ່ງໃຫ້ບຸກຄົນດັ່ງກ່າວລຶບໂພສນັ້ນອອກໄດ້; ຖ້າເຈົ້າຂອງໂພສຍັງບໍ່ປະຕິບັດຕາມ, ຊື່ຂອງພວກເຂົາຈະຖືກເປີດເຜີຍຕໍ່ສາທາລະນະ ແລະ ອາດຈະຖືກປັບໃໝບໍ່ເກີນ 50,000 ເຢນ.

ລະບຽບການດັ່ງກ່າວລະບຸຢ່າງຊັດເຈນວ່າ ສິດເສລີພາບໃນການສະແດງອອກຄວນໄດ້ຮັບການປົກປ້ອງ ແລະ ໂພສທີ່ຖືກຮ້ອງຂໍ ຫຼື ສັ່ງໃຫ້ລຶບນັ້ນແມ່ນຈໍາກັດສະເພາະໂພສທີ່ແນໃສ່ບຸກຄົນໃດໜຶ່ງເທົ່ານັ້ນ; ຂະນະດຽວກັນ, ຍັງຕ້ອງພິຈາລະນາເຖິງຜົນກະທົບທີ່ອາດເກີດຂຶ້ນຕໍ່ສຸຂະພາບຈິດ ແລະ ຮ່າງກາຍຂອງຜູ້ໂພສ ໃນກໍລະນີທີ່ເປັນຜູ້ເຍົາດ້ວຍ.

# ການເລືອກຕັ້ງທົ່ວໄປຂອງມຽນມາ ສິ້ນສຸດແລ້ວ, ພັກ USDP ຊະນະ



(Xinhua) - ການລົງຄະແນນສຽງເລືອກຕັ້ງທົ່ວໄປແບບປະຊາທິປະໄຕຫຼາຍພັກຂອງມຽນມາ ໄດ້ຈັດຂຶ້ນຄົບທັງ 3 ຮອບແລ້ວ ໃນຕອນບ່າຍວັນອາທິດທີ 25 ມັງກອນຜ່ານມາ, ໂດຍຮອບສຸດທ້າຍຈັດຂຶ້ນໃນປະມານ 61 ເມືອງ; ຮອບທຳອິດຈັດຂຶ້ນໃນ 102 ເມືອງ ເມື່ອວັນທີ 28 ທັນວາ 2025 ແລະ ຮອບທີສອງ ຈັດຂຶ້ນໃນ 100 ເມືອງ ເມື່ອວັນທີ 11 ມັງກອນປີນີ້.

ຄະນະກຳມະການເລືອກຕັ້ງແຫ່ງສະຫະພາບ (Union Election Commission - UEC) ລະບຸວ່າ ມີຜູ້ສະໝັກປະມານ 5,000 ຄົນ ຈາກ 57 ພັກການເມືອງ ລົງແຂ່ງຂັນເພື່ອຊິງທີ່ນັ່ງໃນສະພາປະຊາຊົນ (ສະພາຕ່ຳ), ສະພາແຫ່ງຊາດ (ສະພາສູງ), ແລະ ສະພາພາກພື້ນ ແລະ ລັດ.

ການເລືອກຕັ້ງທົ່ວໄປທັງສາມຮອບນີ້ ກວມເອົາ 263 ເຂດເລືອກຕັ້ງສຳລັບສະພາຕ່ຳ, 73 ເຂດເລືອກຕັ້ງ ຕາມລະບົບຜູ້ທີ່ໄດ້ຄະແນນສູງຫຼາຍທີ່ສຸດເປັນຜູ້ຊະນະ (first-past-the-post - FPTP) ແລະ 26 ເຂດເລືອກຕັ້ງ ຕາມລະບົບຕົວແທນສັດສ່ວນ (proportional representation - PR) ສຳລັບສະພາສູງ, 255 ເຂດເລືອກຕັ້ງຕາມລະບົບ FPTP ແລະ 42 ເຂດເລືອກຕັ້ງ ຕາມລະບົບ PR ສຳລັບສະພາພາກພື້ນ ຫຼື ລັດ, ແລະ 29 ເຂດເລືອກຕັ້ງ ຕາມກຸ່ມຊົນເຜົ່າ ສຳລັບສະພາພາກພື້ນ ຫຼື ລັດ.

ຊໍ ມິນ ຕຸນ (Zaw Min Tun) ຫົວໜ້າທີມງານຂໍ້ມູນຂ່າວສານຂອງສະພາຄວາມໝັ້ນຄົງ ແລະປ້ອງກັນປະເທດຂອງມຽນມາກ່າວວ່າປະເທດຈະເປີດກອງປະຊຸມລັດຖະສະພາໃນເດືອນມີນາແລະລັດຖະບານໃໝ່ຈະເຂົ້າຮັບຕຳແໜ່ງໃນເດືອນເມສານີ້.

ການເລືອກຕັ້ງທົ່ວໄປຄັ້ງຫຼ້າສຸດຂອງມຽນມາຈັດຂຶ້ນໃນເດືອນພະຈິກ 2020.

ອີງຕາມຜົນການນັບຄະແນນສຽງຢ່າງເປັນທາງການທີ່ເຜີຍແຜ່ໂດຍ UEC ເມື່ອວັນພະຫັດທີ 29 ມັງກອນ, ພັກສະຫະພາບສາມັກຄີ ແລະ ການພັດທະນາ (Union Solidarity and DevelopmentParty-USDP) ໄດ້ຮັບໄຊຊະນະໃນການເລືອກຕັ້ງຄັ້ງນີ້ ໂດຍໄດ້ທີ່ນັ່ງສ່ວນຫຼາຍໃນລັດຖະສະພາສະຫະພາບ; ຕົວເລກລ່າສຸດສະແດງໃຫ້ເຫັນວ່າ USDP ໄດ້ຮັບ 231 ທີ່ນັ່ງ ໃນສະພາຕ່ຳ ແລະ 108 ທີ່ນັ່ງ ໃນສະພາສູງ ລວມທັງໝົດ 339 ທີ່ນັ່ງ.

ລັດຖະສະພາສະຫະພາບປະກອບດ້ວຍສອງສະພາທີ່ມີທັງໝົດ 664 ທີ່ນັ່ງຄື: ສະພາຕ່ຳ 440 ທີ່ນັ່ງ ແລະ ສະ ພາສູງ 224 ທີ່ນັ່ງ.

# ການໂຄສະນາຫາສຽງເລືອກຕັ້ງທົ່ວໄປຂອງຍີ່ປຸ່ນ ໄດ້ເລີ່ມຂຶ້ນແລ້ວ

(Xinhua) - ການໂຄສະນາຫາສຽງເລືອກຕັ້ງທົ່ວໄປຂອງຍີ່ປຸ່ນ ທີ່ຈະຈັດຂຶ້ນໃນວັນທີ 8 ກຸມພານີ້ ໄດ້ເລີ່ມຕົ້ນຂຶ້ນຢ່າງເປັນທາງການໃນທົ່ວປະເທດ ເມື່ອວັນອັງຄານທີ 27 ມັງກອນຜ່ານມາ, ໂດຍມີທັງໝົດ 465 ທີ່ນັ່ງ ໃນສະ ພາຜູ້ແທນລາດສະດອນ ໃຫ້ແຂ່ງຂັນກັນ.



ຈຸດສຸມຕົ້ນຕໍຂອງການເລືອກຕັ້ງຄັ້ງນີ້ ຄືວ່າພັກຮ່ວມລັດຖະບານ ຢ່າງພັກເສລີປະຊາທິປະໄຕ (Liberal Democratic Party - LDP) ແລະ ພັກນະວັດຕະກຳຍີ່ປຸ່ນ (Japan Innovation Party - JIP) ຈະສາມາດມີສຽງສ່ວນຫຼາຍ ແລະ ເຮັດໃຫ້ລັດຖະບານຂອງນາຍົກລັດຖະມົນຕີ ຊານາເອະ ທາຄາອິຈິ (Sanae Takaichi) ດຳເນີນຕໍ່ໄປໄດ້ຫຼືບໍ່ ຫຼື ຝ່າຍຄ້ານຈະຂະຫຍາຍອຳນາດຂອງຕົນ ແລະ ຂັດຂວາງຜົນໄດ້ຮັບດັ່ງກ່າວ.

ຈາກຈຳນວນ 465 ທີ່ນັ່ງ ໃນສະພາຕ່ຳ, 289 ທີ່ນັ່ງຈະຖືກເລືອກຕັ້ງຈາກເຂດເລືອກຕັ້ງແບບສະມາຊິກຄົນດຽວ ແລະ 176 ທີ່ນັ່ງ ຈາກການເລືອກຕັ້ງແບບສັດສ່ວນ ໃນ 11 ກຸ່ມພາກພື້ນ; ສະຖານີໂທລະພາບແຫ່ງຊາດ NHK ລາຍງານວ່າ ມີຜູ້ສະໝັກຫຼາຍກວ່າ 1,285 ຄົນເປັນແມ່ຍິງກວມເອົາ 24% ເຊິ່ງເປັນສະຖິຕິສູງສຸດ, ແຕ່ຕົວເລກນີ້ເພີ່ມຂຶ້ນພຽງແຕ່ 1% ຈາກການເລືອກຕັ້ງທົ່ວໄປຄັ້ງທີ່ຜ່ານມາ. NHK ຄາດຄະເນວ່າ ພັກການເມືອງຕ່າງໆ ຈະຖືກຖຽງກັນຢ່າງດຸເດືອດໃນໄລຍະການໂຄສະນາຫາສຽງ ກ່ຽວກັບມາດຕະການຂອງລັດຖະບານທາຄາອິຈິເພື່ອຮັບມືອັດຕາເງິນເຟີ້ລວມທັງນະໂຍບາຍການຕ່າງປະເທດ ແລະ ນະໂຍບາຍຄວາມໝັ້ນຄົງ.

ກ່ອນໜ້ານີ້, ພັກ LDP ມີ 199 ທີ່ນັ່ງ ແລະ ພັກ JIP ມີ 34 ທີ່ນັ່ງ; ທາຄາອິຈິ ເຊິ່ງດຳລົງຕຳແໜ່ງປະທານພັກ LDP ກ່າວໃນການໂຕ້ວາທີຂອງຜູ້ນຳພັກເມື່ອວັນຈັນວ່າ ນາງຈະລາອອກທັນທີ ຖ້າພັກຮ່ວມລັດຖະບານບໍ່ສາມາດມີສຽງສ່ວນຫຼາຍໃນການເລືອກຕັ້ງທີ່ຈະມາເຖິງ.

ພັກຝ່າຍຄ້ານໃໝ່ ພັນທະມິດປະຕິຮູບສາຍກາງ (Centrist Reform Alliance) ເຊິ່ງໄດ້ເປີດຕົວຢ່າງເປັນທາງການໃນຕົ້ນເດືອນມັງກອນນີ້ ໄດ້ກາຍເປັນພັກຝ່າຍຄ້ານຕົ້ນຕໍຂອງຍີ່ປຸ່ນ ໂດຍມີ 165 ທີ່ນັ່ງ; ພັນທະມິດໃໝ່ລະຫວ່າງພັກປະຊາທິປະໄຕລັດຖະທຳມະນູນແຫ່ງຍີ່ປຸ່ນ (Constitutional Democratic Party of Japan) ແລະພັກໂຄເມໂຕະ (Komeito) ອະດີດພັນທະມິດຂອງ LDP ມີຈຸດປະສົງເພື່ອເອົາຊະນະພັກຮ່ວມລັດຖະບານອະນຸລັກນິຍົມໃນການເລືອກຕັ້ງທີ່ຈະມາເຖິງ.

ເມື່ອວັນທີ 23 ມັງກອນ, ນາງ ທາຄາອິຈິ ໄດ້ຍຸບສະພາຜູ້ແທນລາດສະດອນເພື່ອຈັດການເລືອກຕັ້ງໃໝ່ ໂດຍມີເປົ້າໝາຍທີ່ຈະໃຊ້ຄວາມນິຍົມທີ່ສູງຂອງຄະນະລັດຖະມົນຕີໃນປັດຈຸບັນ, ເຊິ່ງຖືເປັນຄັ້ງທຳອິດໃນຮອບ 60 ປີ ທີ່ມີການຍຸບສະພາໃນຕອນເລີ່ມຕົ້ນຂອງກອງປະຊຸມສະໄໝສາມັນ.

ເຫຼືອເວລາຫຼາຍກວ່າສອງປີໃນວາລະສະພາຜູ້ແທນລາດສະດອນຊຸດປັດຈຸບັນ, ທາຄາອິຈິໃຫ້ເຫດຜົນໃນການຕັດສິນໃຈຈັດການເລືອກຕັ້ງກ່ອນກຳນົດໂດຍອ້າງວ່າ ນາງຍັງບໍ່ໄດ້ຮັບການສະໜັບສະໜູນຈາກປະຊາຊົນສຳລັບການດຳ ລົງຕຳແໜ່ງນາຍົກລັດຖະມົນຕີຂອງນາງ ເຊິ່ງເລີ່ມຕົ້ນໃນເດືອນຕຸລາ 2025 ແລະ ພັກຮ່ວມລັດຖະບານໃໝ່ກໍສ້າງຕັ້ງຂຶ້ນໃນເດືອນດຽວກັນ.

ການຕັດສິນໃຈດັ່ງກ່າວຖືກວິພາກວິຈານວ່າ ເຮັດໃຫ້ຜູ້ມີສິດເລືອກຕັ້ງມີເວລາໜ້ອຍຫຼາຍໃນການປະເມີນຂໍ້ສະເໜີທາງນະໂຍບາຍທີ່ແຂ່ງຂັນໂດຍມີໄລຍະເວລາການໂຄສະນາຫາສຽງພຽງແຕ່ 12 ວັນ ເຊິ່ງສັ້ນທີ່ສຸດໃນປະຫວັດສາດຫຼັງສົງຄາມຂອງຍີ່ປຸ່ນ; ພັກຝ່າຍຄ້ານກໍໂຈມຕີແຜນຂອງທາຄາອິຈິເຊັ່ນກັນ, ໂດຍກ່າວວ່ານາງໃຫ້ຄວາມສຳຄັນກັບເລື່ອງການເມືອງຫຼາຍກວ່າການອະນຸມັດງົບປະມານເບື້ອງຕົ້ນສຳລັບປີງົບປະມານ 2026 ທີ່ຈະເລີ່ມຕົ້ນໃນເດືອນເມສານີ້ ເຖິງວ່ານາງໄດ້ໃຫ້ຄຳໝັ້ນສັນຍາທີ່ຈະໃຫ້ຄວາມສຳຄັນກັບການດຳເນີນນະໂຍບາຍເປັນອັນດັບທຳອິດກໍຕາມ.

ສະພາຜູ້ແທນລາດສະດອນຂອງຍີ່ປຸ່ນ ມາຈາກການເລືອກຕັ້ງໂດຍໃຊ້ລະບົບປະສົມ ເຊິ່ງລວມທັງເຂດເລືອກແບບທີ່ນັ່ງດຽວແລະຕົວແທນແບບສັດສ່ວນ; ຜູ້ມີສິດເລືອກຕັ້ງແຕ່ລະຄົນ ຈະລົງຄະແນນສຽງສອງຄັ້ງ: ຄັ້ງໜຶ່ງເພື່ອເລືອກຜູ້ສະໝັກໃນເຂດເລືອກຕັ້ງແບບທີ່ນັ່ງດຽວ ແລະ ອີກຄັ້ງ ເພື່ອເລືອກພັກສຳລັບການເລືອກຕັ້ງແບບສັດສ່ວນ.

# ສະພາ ສ.ເກົາຫຼີ ຜ່ານກົດໝາຍປາບປາມ ເວັບລະເມີດລິຂະສິດ ແລະ ປີ້ຄອນເສີດແພງ



(AFP) - ວັນທີ 29 ມັງກອນຜ່ານມາ, ສະພາແຫ່ງຊາດ ສ.ເກົາຫຼີຜ່ານຮ່າງກົດໝາຍປັບປຸງຫຼາຍສະບັບ ໂດຍມີຈຸດປະສົງເພື່ອຫ້າມການຂາຍປີ້ເກີນລາຄາໃນວົງການສະແດງ ແລະ ກິລາຂອງປະເທດ, ແລະ ຄວບຄຸມການເຜີຍແຜ່ເນື້ອຫາໃຫ້ເປັນໄປຕາມກົດໝາຍ.

ກົດໝາຍລິຂະສິດສະບັບປັບປຸງ ໄດ້ນຳສະເໜີກົນໄກການປິດກັ້ນເວັບໄຊສຸກເສີນ ເຊິ່ງຈະອະນຸຍາດໃຫ້ລັດຖະມົນຕີກະຊວງວັດທະນະທຳ, ກິລາ ແລະ ການທ່ອງທ່ຽວ (ລມຕ.ວກທ) ສັ່ງໃຫ້ຜູ້ໃຫ້ບໍລິການອິນເຕີເນັດປິດກັ້ນການເຂົ້າເຖິງເວັບໄຊທີ່ລະເມີດລິຂະສິດທັນທີເມື່ອການລະເມີດເຫັນໄດ້ຊັດເຈນ ແລະ ອາດຈະກໍ່ໃຫ້ເກີດຄວາມເສຍຫາຍທີ່ບໍ່ສາມາດແກ້ໄຂໄດ້; ນອກຈາກນັ້ນ, ລະບົບໃໝ່ນີ້ ຈະອະນຸຍາດໃຫ້ ລມຕ.ວກທ ປິດກັ້ນການເຂົ້າເຖິງເວັບໄຊທີ່ຜິດກົດໝາຍທີ່ຢູ່ຕ່າງປະເທດ ເຊິ່ງເປັນອຳນາດທີ່ມອບໃຫ້ພຽງຄະນະກຳມະການມາດຕະຖານການສື່ສານແຫ່ງເກົາຫຼີພາຍໃຕ້ກົດໝາຍເກົ່າ.

ໃນກໍລະນີທີ່ມີການລະເມີດລິຂະສິດໂດຍເຈດຕະນາຫຼືຊ້ຳແລ້ວຊ້ຳອີກ, ສານອາດຕັດສິນໃຫ້ຊົດເຊີຍເຖິງ 5 ເທົ່າຂອງຄວາມເສຍຫາຍທີ່ຮັບຮູ້; ສ່ວນການລົງໂທດທາງອາຍາ ກໍໄດ້ຮັບການປັບປຸງໃຫ້ເຂັ້ມລວດຂຶ້ນຈາກຕິດຄຸກບໍ່ເກີນ 5 ປີ ເປັນ 7 ປີ, ຂະນະທີ່ຄ່າປັບໃໝເພີ່ມຂຶ້ນຈາກ 50 ລ້ານວອນ (ປະມານ 34,294 ໂດລາ) ເປັນ 100 ລ້ານວອນ (ປະມານ 68,588 ໂດລາ).

ກົດໝາຍຈະເລີ່ມມີຜົນບັງຄັບໃຊ້ 6 ເດືອນ ຫຼັງຈາກການປະກາດໃນຈົດໝາຍເຫດທາງລັດຖະການ, ຂະນະທີ່ມາດຕະການປິດກັ້ນເວັບໄຊສຸກເສີນຈະຖືກຈັດຕັ້ງປະຕິບັດໄວຂຶ້ນຫຼືຫຼັງຈາກ 3 ເດືອນ; ສ່ວນຄ່າເສຍຫາຍທາງດ້ານການລົງໂທດ ຈະໃຊ້ສະເພາະກັບການລະເມີດທີ່ເກີດຂຶ້ນຫຼັງຈາກກົດໝາຍມີຜົນບັງຄັບໃຊ້ເທົ່ານັ້ນ.

ສຳລັບການປັບປຸງລັດຖະບັນຍັດການສະແດງ ແລະ ລັດຖະບັນຍັດການສົ່ງເສີມກິລາແຫ່ງຊາດ ແມ່ນສຸມໃສ່ການຂາຍປີ້ເກີນລາຄາ ລວມທັງປັບປຸງໃຫ້ກວມເອົາກໍລະນີທີ່ພິສູດບໍ່ໄດ້ທາງເຕັກນິກ ໂດຍກຳນົດໃຫ້ຄວາມພະຍາຍາມທີ່ຈະຫຼີກລ່ຽງ ຫຼື ຂັດຂວາງຂະບວນການຊື້ປີ້ທີ່ຍຸຕິທຳ ເພື່ອຫວັງຜົນກຳໄລຈະຖືວ່າຜິດກົດໝາຍ, ສ່ວນຜູ້ຂາຍປີ້ ແລະ ຜູ້ປະກອບການຕະຫຼາດອອນລາຍ ຕ້ອງໃຊ້ມາດຕະການ ແລະ ການຄຸ້ມຄອງ ເພື່ອປ້ອງກັນການຂາຍຕໍ່ທີ່ຜິດກົດໝາຍ.

ການລົງໂທດໄດ້ແກ່: ຄ່າປັບໃໝທາງປົກຄອງ ສູງສຸດເຖິງ 50 ເທົ່າ, ການຢຶດ ຫຼື ຮຽກຄືນຜົນກຳໄລທີ່ໄດ້ມາໂດຍບໍ່ຖືກຕ້ອງ, ແລະການເສີມສ້າງອຳນາດການສືບສວນສອບສວນສຳລັບອົງການລາຍງານທີ່ໄດ້ຮັບມອບໝາຍ; ຫາກຜູ້ຂາຍປີ້ ຫຼື ເວທີຕ່າງໆບໍ່ປະຕິບັດຕາມການຮ້ອງຂໍສິ່ງຂໍ້ມູນ ອາດສົ່ງຜົນໃຫ້ຖືກປັບໃໝສູງສຸດເຖິງ 5 ລ້ານວອນ (ປະມານ 3,429 ໂດລາ).

ນອກຈາກນັ້ນ, ຈະມີລາງວັນໃຫ້ແກ່ຜູ້ໃຫ້ຂໍ້ມູນ ເພື່ອສົ່ງເສີມການລາຍງານການເຮັດທຸລະກຳປີ້ທີ່ຜິດກົດໝາຍ, ໂດຍມີເປົ້າໝາຍເພື່ອຂັດຂວາງສິ່ງທີ່ລັດຖະບານປະເມີນວ່າ ເປັນຕະຫຼາດຂາຍປີ້ເຖື່ອນທີ່ມີມູນຄ່າຫຼາຍກວ່າ 100 ຕື້ວອນ (ປະມານ 68,587,580 ໂດລາ) ຕໍ່ປີ.

# ຕັດໄມ້ທຳລາຍປ່າ ໄພພິບັດຕາມມາ

❖ ວິເສດ ສະແຫວງສຶກສາ

ຂ່າວຮ້ອນໆອອກມາຈາກອິນໂດເນເຊຍຫວ່າງບໍ່ເທິງມານີ້ບອກວ່າ ທ່ານລັດຖະມົນຕີກະຊວງປ່າໄມ້ຂອງປະເທດນີ້ ໄດ້ອອກມາປະກາດຢ່າງຂຶງຂັງມັ່ງມໍວ່າຈະຈົກຖິ້ມໃບອະນຸຍາດຊຸດຄົ້ນໄມ້ກວ່າ 20 ສະບັບ ໃນທົ່ວປະເທດ ຍ້ອນມີການພົບວ່າເຫດນ້ຳຖ້ວມໃຫຍ່ຢູ່ເກາະຊູມາຕຣາ ໃນຕົ້ນເດືອນທັນວາປີຜ່ານມານີ້ນັ້ນ ເກີດມາຈາກການຕັດໄມ້ທຳລາຍປ່າ ເຊິ່ງເຮັດໃຫ້ມີຜູ້ເສຍຊີວິດກວ່າ 1,000 ຄົນ, ບ້ານເຮືອນຖືກຂີ້ຕົມ ແລະ ຂີ້ເຫຍື້ອທັບຖົມ ບໍ່ນັບຜູ້ອົບພະຍົບໜີຕາຍກໍຄືຄວາມເສຍຫາຍທາງເສດຖະກິດ. ບັນດານັກເຄື່ອນໄຫວເພື່ອປົກປ້ອງຮັກສາສິ່ງແວດລ້ອມ ກໍຄືເຫຼົ່າຊ່ຽວຊານ ຕ່າງກໍອອກມາຊີ້ນິ້ວວ່າ ເປັນຍ້ອນໃບອະນຸຍາດອຸບາດຂາດການຮິ່ນຕອງນີ້ລະ ຈຶ່ງເກີດມີອຸທົກກະໄພມໍລະນະຄັ້ງນີ້; ທາງກະຊວງປ່າໄມ້ບໍ່ພຽງແຕ່ງ່ຽງຫູຟັງຄຳວິຈານ ແຕ່ຍັງໄດ້ປະກາດສັ່ງວ່າ ໃບອະນຸຍາດຊຸດຄົ້ນໄມ້ ຈຳນວນ 22 ຊຸດ ຈະຖືກຈົກຖິ້ມລົງຖັງຂີ້ເຫຍື້ອໂດຍບໍ່ມີເງື່ອນໄຂ.

ເຫັນບໍ່ລະ ບ້ານເພິ່ນເມືອງທ່ານເຂົາເດັດຂາດເອົາແທ້ໆ ເມື່ອກວດພົບການກະທຳຜິດກໍຕ້ອງແກ້ຢ່າງທັນຄວັນໂລດ, ເຮັດແນວນີ້ ສັງຄົມຈຶ່ງຈະມີສັດທາຕໍ່ຄວາມສັກສິດຂອງກົດໝາຍ!.

ແຈ້ງຊັບສິນຕ້ອງແຈ້ງແທ້ໆ ບໍ່ແມ່ນແຈ້ງເພື່ອເຊື່ອງອຳ

ນັບແຕ່ປີ 2026 ເປັນຕົ້ນໄປ ທາງການຍີ່ປຸ່ນພາຍໃຕ້ລັດຖະບານຂອງທ່ານນາງຊານາເອະ ຕາກາອິຈິ ນາຍົກຍິງຂອງຍີ່ປຸ່ນ ຈະເຄັ່ງຄັດຮັດກຸມເລື່ອງການແຈ້ງຊັບສິນຂອງຄົນຕ່າງປະເທດທີ່ອາໄສຢູ່ຍີ່ປຸ່ນ ຄືຊາວຕ່າງປະເທດທຸກຄົນ ຕ້ອງແຈ້ງຊັບສິນຂອງຕົນລົງຖານຂໍ້ມູນສະເພາະ; ມາດຕະການນີ້ ມີເປົ້າໝາຍເພື່ອຮັບປະກັນຄວາມໝັ້ນຄົງແຫ່ງຊາດ ແລະ ຄວາມໝັ້ນຄົງທາງເສດຖະກິດ, ມາດຕະການນີ້ ຈະຊ່ວຍໃຫ້ທາງການຍີ່ປຸ່ນສາມາດຕິດຕາມຊັບສິນທີ່ມີຕົວຈິງໃນການຄອບຄອງຂອງຄົນຕ່າງປະເທດ. ວ່າກັນວ່າ ລະບຽບການແຈ້ງຊັບສິນທີ່ເຄັ່ງຄັດນີ້ ຈະເຮັດໃຫ້ຄົນຕ່າງປະເທດປະເຊີນກັບຂໍ້ຈຳກັດຫຼາຍຂຶ້ນໃນການຊື້ອະສັງຫາລິມະຊັບ, ສ່ວນວ່າຈະມີຂໍ້ຈຳກັດຫຍັງແດ່ນັ້ນ ຂ່າວບໍ່ໄດ້ໃຫ້ລາຍລະອຽດ; ແຕ່ເວົ້າ ຫຼື ບໍ່ເວົ້າ ການກຳນົດໃຫ້ຄົນຕ່າງປະເທດແຈ້ງຊັບສິນທີ່ຄອບຄອງຕົວຈິງນັ້ນ ຄົງຈະຊ່ວຍກຳຈັດການແອບແຝງເປັນນາຍໜ້າຂອງຄົນເຈົ້າຂອງປະເທດເຊັ່ນ: ເປັນຫຸ່ນເຊີດອ້າງວ່າເປັນເຈົ້າຂອງຊັບສິນແທ້ໆ ປາກົດການຫຍໍ້ທໍ້ນີ້ ມັກເກີດຂຶ້ນໃນສັງຄົມທີ່ກົດໝາຍບໍ່ເປັນກົດໝາຍ ແຕ່ເປັນພຽງກົດໝູ່!.

ຜະເດັດເສິກຢ່າງເດັດຂາດ ຕ້ານຢາສູບໄຟຟ້າ

ທ່ານຈູນເຄບລີອາກມັດ(Dzulkebly Akmad) ລັດຖະມົນຕີກະຊວງສາທາລະນະສຸກມາເລເຊຍ ໄດ້ອອກມາປະກາດກ້ອງວ່າຈະຈັດການເດັດຂາດກັບຢາສູບໄຟຟ້າ ແລະ ມາດຕະການດັ່ງກ່າວ ຈະເຮັດສຳເລັດໃນປີ 2026; ໃນຊຸມປີຫຼັງໆມານີ້ ຈຳນວນຜູ້ທີ່ໄດ້ຮັບຜົນກະທົບດ້ານສຸຂະພາບຈາກຢາສູບໄຟຟ້າຢູ່ມາເລເຊຍນັ້ນ ໄດ້ເພີ່ມຂຶ້ນ ໂດຍສະເພາະແມ່ນສຸຂະພາບຈິດ, ທ່ານລັດຖະມົນຕີໄດ້ເນັ້ນວ່າ ເລື່ອງກຳຈັດຢາສູບໄຟຟ້ານັ້ນ ຈະບໍ່ມີຄຳວ່າ "ຖ້າວ່າ" ບໍ່ມີຄຳວ່າຈະ "ເຮັດ ຫຼື ບໍ່" ເພາະເລື່ອງນີ້ ຄະນະລັດຖະບານໄດ້ຕົກລົງຮັບຮອງເອົາແລ້ວ ເຫຼືອພຽງວ່າຈະເລີ່ມຕົ້ນເມື່ອໃດເທົ່ານັ້ນ.

ທັງສາມເລື່ອງຍ່ອຍທີ່ເອົາມາເວົ້າໃຫ້ຟັງເທື່ອນີ້ ສັງລວມມາຈາກຂ່າວຕ່າງປະເທດໃນໜ້າໜັງສືພິມວຽງຈັນທາມ ສະບັບວັນທີ 17 ທັນວາ 2025.




#ບ່າວກະບື

**ເມຍ:** "ອ້າຍຊິເຮັດອີ່ຫຍັງ ໃນກໍລະນີອ້າຍແຕ່ງດອງກັບແມ່ຍິງທີ່ຮັ່ງໆ?"

**ຜົວ:** "ເອີ ໃນກໍລະນີນັ້ນ ອ້າຍຈະບໍ່ເຮັດຫຍັງເລີຍ ເພາະວ່າບໍ່ມີຄວາມຈຳເປັນ, ແບບແບບວ່າເມຍອ້າຍຮັ່ງພໍແຮງແລ້ວ!."

#BAOKBU

**WIFE:** "What would you have done in case you were married to a very[very rich lady?"

**HUSBAND:** Well nothing because then there was no need for me to do anything!"

ທະນາຄານພັດທະນາລາວ
LDB Bank

## ຕິດຕາມ...

(ຕໍ່ຈາກໜ້າ 1)

ແລະ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ ທັງເປັນຮອງຫົວໜ້າອະນຸກຳມະການບໍລິຫານ, ພິທີການ ແລະ ງົບປະມານ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ຢູ່ແຂວງຫົວພັນ ໂດຍການຕ້ອນຮັບ ແລະ ເປີດກອງປະຊຸມຮ່ວມເຮັດວຽກຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ຫົວພັນ ພ້ອມດ້ວຍບັນດາທ່ານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າອະນຸກຳມະການຕ່າງໆແລະກອງເລຂາຊ່ວຍວຽກ ຄລຂ ເຂົ້າຮ່ວມ; ຈຸດປະສົງກໍເພື່ອຕິດຕາມ, ຊຸກຍູ້ການກະກຽມຄວາມພ້ອມໃນດ້ານຕ່າງໆ ໃນການຮັບໃຊ້ວຽກງານເລືອກຕັ້ງພາຍໃນແຂວງ ເຊິ່ງເຫັນວ່າສຳເລັດຕາມແຜນການທີ່ກຳນົດ ທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງ ຄລຂ ໃນການຈັດຕັ້ງປະຕິບັດມະຕິ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ ເພື່ອລາຍງານ ຄລຊ. ແຂວງຫົວພັນ ມີຜູ້ມີສິດເລືອກຕັ້ງ (ພົນລະເມືອງລາວທີ່ມີອາຍຸ 18 ປີຂຶ້ນໄປ) 171,059 ຄົນ ເປັນຍິງ 79,103 ຄົນ, ມີ 472 ໜ່ວຍປ່ອນບັດເລືອກຕັ້ງ ໃນ 10 ເມືອງທົ່ວແຂວງ.

ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນເພື່ອປຶກສາຫາລື, ແລກປ່ຽນຄຳຄິດເຫັນໃນວຽກງານຕ່າງໆ ເປັນຕົ້ນແມ່ນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆ ຮັບປະກັນເຮັດໃຫ້ບັ້ນເລືອກຕັ້ງຄັ້ງນີ້ ໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນຕາມລະດັບຄາດໝາຍ ພ້ອມທັງຮັບປະກັນ4ຄາດໝາຍໃຫຍ່ຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດຄົບຖ້ວນ100%,ຮັບປະກັນການໃຊ້ສິດມີຄວາມຖືກຕ້ອງ100%,ຮັບປະກັນຄວາມສະຫງົບປອດໄພ 100% ແລະ ຮັບປະກັນຄວາມໂປ່ງໃສ100% ໃນວັນເລືອກຕັ້ງທີ່ຈະມາເຖິງ.

ວັນທີ26-27ມັງກອນ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ແລະ ທ່ານ ນາງ ສວຍເຜັດ ທອງສົມບັດ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ທັງເປັນກຳມະການຄະນະກຳມະການເລືອກຕັ້ງແຂວງຫົວພັນ ພ້ອມດ້ວຍຄະນະໄດ້ລົງຕິດຕາມ,ຊຸກຍູ້ວຽກງານກະກຽມການເລືອກຕັ້ງ ສສຊ ປະຈຳເຂດເລືອກຕັ້ງທີ 8 ແລະ ສສຂ ຫົວພັນ ຢູ່ເມືອງຊຽງຄໍ້ ແລະ ເມືອງແອດ; ຈຸດປະສົງກໍເພື່ອຕິດຕາມກວດກາເບິ່ງຄວາມພ້ອມໃນການຮັບໃຊ້ບັ້ນເລືອກຕັ້ງ ແລະ ແຜນການກະກຽມໃນດ້ານຕ່າງໆ ຂອງຄະນະກຳມະການເລືອກຕັ້ງຢູ່ຂັ້ນເມືອງ. ໂດຍໄດ້ເປີດກອງປະຊຸມເພື່ອຮັບຟັງລາຍງານການກະກຽມຄວາມພ້ອມຮອບດ້ານໃນການປ່ອນບັດເລືອກຕັ້ງ ຈາກທ່ານ ເຄນທອງ ພອນພະແກ້ວ ເລຂາພັກເມືອງ, ປະທານຄະນະກຳມະການເລືອກຕັ້ງເມືອງຊຽງຄໍ້ ແລະ ທ່ານ ນາງ ມະນີວອນ ສອນມະນີ ຮອງເລຂາພັກເມືອງ,ຄະນະກຳມະການເລືອກຕັ້ງເມືອງແອດ ເຊິ່ງທັງສອງເມືອງ ມີຄວາມພ້ອມໃນການກະກຽມການເລືອກຕັ້ງໃນບາດກ້າວຕ່າງໆ ໂດຍມີຜົນສຳເລັດຫຼາຍດ້ານຕາມແຜນການທີ່ວາງໄວ້; ເຂດເລືອກຕັ້ງເມືອງຊຽງຄໍ້ ມີ 59 ບ້ານ, ມີຜູ້ມີສິດປ່ອນບັດເລືອກຕັ້ງ14,693ຄົນ ປັນຍິງ 6,806 ຄົນ, ກຳນົດ 28 ໜ່ວຍປ່ອນບັດເລືອກຕັ້ງ ແລະ ເຂດເລືອກຕັ້ງເມືອງແອດ ມີ77 ບ້ານ, ມີຜູ້ມີສິດເລືອກຕັ້ງ 15,109 ຄົນ ເປັນຍິງ 6,477 ຄົນ, ໄດ້ແບ່ງອອກເປັນ 38 ໜ່ວຍເລືອກຕັ້ງ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະ ກອບຄຳເຫັນເພື່ອປຶກສາຫາລື, ແລກປ່ຽນຄຳຄິດເຫັນກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ແຜນການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆ ແນໃສ່ຮັບປະກັນການດຳເນີນບັ້ນເລືອກຕັ້ງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນຕາມລະດັບຄາດໝາຍພ້ອມທັງຮັບປະກັນ 4 ຄາດໝາຍໃຫຍ່ສີ່ 100%.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນເນັ້ນໜັກຕໍ່ຄະນະກຳມະການເລືອກຕັ້ງທັງສອງເມືອງ ຈົ່ງພ້ອມກັນເອົາໃຈໃສ່ຮອບດ້ານ ໂດຍຖືເອົາການເລືອກຕັ້ງຄັ້ງນີ້ ເປັນວຽກບຸລິມະສິດທີ່ສຳຄັນ ແລະ ເປັນວຽກໃຈກາງໃນຂະນະນີ້; ເພື່ອປະຕິບັດໃຫ້ໄດ້ຄືແນວນັ້ນຕ້ອງສຸມໃສ່ 5 ວຽກງານຕົ້ນຕໍດັ່ງນີ້: ໂຄສະນາເຜີຍແຜ່ນິຕິກຳ ແລະ ເອກະສານກ່ຽວກັບການເລືອກຕັ້ງ ໃຫ້ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າພາຍໃນເມືອງເຊື່ອມຊຶມ ແລະ ເຂົ້າໃຈຢ່າງທົ່ວເຖິງ ພ້ອມທັງກວດກາຄືນຜູ້ມີສິດເລືອກຕັ້ງຢ່າງລະອຽດ (ຕາມສຳມະໂນຄົວຜູ້ມີສິດເລືອກຕັ້ງນັບແຕ່ອາຍຸ 18 ປີຂຶ້ນໄປ ແລະ ໃຫ້ບຸລິມະສິດແກ່ຜູ້ມີສິດເລືອກຕັ້ງທີ່ເປັນຜູ້ມີອາຍຸສູງ, ຄົນເຈັບຕິດຕຽງ); ຈັດຕັ້ງ ແລະ ນຳພາຜູ້ສະໝັກຮັບເລືອກຕັ້ງເປັນຜູ້ແທນ ເຄື່ອນໄຫວໂຄສະນາຫາສຽງ ແລະ ພົບປະປະຊາຊົນຕາມແຕ່ລະຈຸດ; ກະກຽມຫີບປ່ອນບັດ, ວັດຖຸອຸປະກອນທີ່ຈຳເປັນ ແລະ ມອບໝາຍໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງຕິດຕາມກວດກາຜົນການກະກຽມໃນການປະຕິບັດຜ່ານມາ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງຢ່າງປົກກະຕິແລະທັນກຳນົດເວລາໃນການເລືອກຕັ້ງທີ່ຈະມາເຖິງ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລີວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ